ປົດລາຍງານເສດຖະກິດ
2020



ສາລະບານ

ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ 1

I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ 4

1.1. ຂະແໜງອຸດສາຫະກຳ 4

1.2. ຂະແໜງກະສິກຳ 5

1.3. ຂະແໜງບໍລິການ 6

1.4. ອັດຕາເງິນເຟີ້ 6

II. ຂະແໜງການເງິນຂອງລັດ 8

2.1. ຖານະການເງິນຂອງລັດ 8

2.2. ລາຍຮັບງົບປະມານ 8

2.3. ລາຍຈ່າຍງົບປະມານ 9

2.4. ດຸ່ນດ່ຽງງົບປະມານ 9

III. ຂະແໜງເງິນຕາ-ການເງິນ 10

3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ 10

3.2. ຖານເງິນຕາ 11

3.3. ປະລິມານເງິນ 12

3.4. ອັດຕາດອກເບ້ຍ 13

3.5. ເງິນຝາກ 14

3.6. ສິນເຊື່ອ 15

3.7. ລະບົບສະຖາບັນການເງິນ-ເງິນຕາ 15

IV. ດຸນການຊຳລະກັບຕ່າງປະເທດ 17

4.1. ດຸນການຊຳລະລວມ 17

4.2. ດຸນບັນຊີຊຳລະປົກກະຕິ 18

4.3. ດຸນບັນຊີທຶນ ແລະ ບັນຊີການເງິນ 19

4.4. ໜີ້ສິນຕ່າງປະເທດຂອງລັດຖະບານ 20

V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2021 21

ສະພາບໍລິຫານທະນາຄານແຫ່ງ ສປປ ລາວ 23

ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ 24

ຊ່ວຍວຽກຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ 24

ບັນດາຫົວໜ້າກົມ ຢູ່ທະນາຄານແຫ່ງ ສປປ ລາວ 25

ກົງຈັກການຈັດຕັ້ງທຽບເທົ່າກົມ ຢູ່ທະນາຄານແຫ່ງ ສປປ ລາວ 25

ກົງຈັກການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ 26

ພາກສ່ວນທີ່ຂຶ້ນກັບການຊີ້ນຳຂອງທະນາຄານແຫ່ງ ສປປ ລາວ 26

ແຜນວາດ. ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ 27

ສາລະບານຮູບ

ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2016 - 2020 4
ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ 5
ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ 5
ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ 6
ຮູບສະແດງ 5. ເງິນເຟີ້ພື້ນຖານ ແລະ ເງິນເຟີ້ບໍ່ເປັນພື້ນຖານ, ເງິນເຟີ້ສິນຄ້າພາຍໃນ ແລະ ເງິນເຟີ້ສິນຄ້ານຳເຂົ້າ 7
ຮູບສະແດງ 6. ການປະກອບສ່ວນຂອງໝວດສິນຄ້າຕໍ່ອັດຕາເງິນເຟີ້ລວມ ໄລຍະ 5 ປີຜ່ານມາ 7
ຮູບສະແດງ 7. ລາຍຮັບງົບປະມານ 8
ຮູບສະແດງ 8. ລາຍຈ່າຍງົບປະມານ 9
ຮູບສະແດງ 9. ດຸ່ນດ່ຽງງົບປະມານ 9
ຮູບສະແດງ 10. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ 11
ຮູບສະແດງ 11. ໂຄງປະກອບຂອງຖານເງິນຕາ 12
ຮູບສະແດງ 12. ການຂະຫຍາຍຕົວຂອງປະລິມານເງິນ (M2) 13
ຮູບສະແດງ 13. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ 14
ຮູບສະແດງ 14. ໂຄງປະກອບຂອງເງິນຝາກ ໃນໄລຍະ 5 ປີ ຜ່ານມາ 14
ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ 15
ຮູບສະແດງ 16. ດຸນການຊຳລະກັບຕ່າງປະເທດ 18
ຮູບສະແດງ 17. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ 19
ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີການເງິນ 20
ຮູບສະແດງ 19. ໜີ້ສິນຕໍ່ຕ່າງປະເທດ 21

ສາລະບານຕາຕະລາງ

ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ.....28
ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ຄິດໄລ່ຕາມມູນຄ່າເພີ່ມ (ຕື້ກີບ) 29
ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2015 = 100) 30
ຕາຕະລາງທີ 4. ອັດຕາເງິນເຟີ້ (%) 31
ຕາຕະລາງທີ 5. ຖານະການເງິນຂອງລັດ (ຕື້ກີບ).....32
ຕາຕະລາງທີ 6. ລາຍຮັບງົບປະມານ (ຕື້ກີບ).....33
ຕາຕະລາງທີ 7. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ) 34
ຕາຕະລາງທີ 8. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ) 35
ຕາຕະລາງທີ 9. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ).....36
ຕາຕະລາງທີ 10. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ (ຄິດເປັນສ່ວນຮ້ອຍຕໍ່ປີ) 37
ຕາຕະລາງທີ 11. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ).....39
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ).....40
ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (ລ້ານໂດລາສະຫະລັດ) 41
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາສະຫະລັດ).....43
ຕາຕະລາງທີ 15. ໜີ້ສິນຕໍ່ຕ່າງປະເທດ (ລ້ານໂດລາສະຫະລັດ) 44
ຕາຕະລາງທີ 16. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ.....45
ຕາຕະລາງທີ 17. ຕົວເລກນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວຂອງ ສປປ ລາວ.....46
ຕາຕະລາງທີ 18. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ 47
ຕາຕະລາງທີ 19. ລາຍຊື່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ ທຫລ ຄຸ້ມຄອງ 48
ຕາຕະລາງທີ 20. ລາຍຊື່ຮ້ານແລກປ່ຽນເງິນຕາ ໃນນະຄອນຫຼວງວຽງຈັນ ທີ່ ທຫລ ຄຸ້ມຄອງ.....52



ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ການລະບາດຂອງພະຍາດອັກເສບປອດ Covid-19 ໄດ້ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ສະຫວັດດີການຂອງຄົນທົ່ວໂລກ, ສົ່ງຜົນເຮັດໃຫ້ເສດຖະກິດໂລກຖືດຖອຍຕໍ່າສຸດໃນຮອບຫຼາຍປີ. ເສດຖະກິດໂລກຂະຫຍາຍຕົວຫຼຸດລົງ ຈາກ 2,8% ໃນປີ 2019 ມາເປັນ -3,3% ໃນປີ 2020[1], ໃນຂະນະທີ່ ບັນດາປະເທດເສດຖະກິດທີ່ມີລາຍໄດ້ຕ່ຳ ແລະ ຕະຫຼາດເສດຖະກິດເກີດໃໝ່ ໄດ້ຮັບຜົນກະທົບຢ່າງໜັກໜ່ວງ. ໃນການຮອງຮັບ ແລະ ຕອບໂຕ້ສະພາບດັ່ງກ່າວ, ທະນາຄານກາງປະເທດຕ່າງໆ ໄດ້ນຳໃຊ້ມາດຕະການທີ່ກວ້າງຂວາງ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຕໍ່ເສດຖະກິດ ແລະ ເຮັດໃຫ້ສະພາບການເງິນ-ເງິນຕາສືບຕໍ່ມີສະຖຽນລະພາບ. ບັນດາມາດຕະການດັ່ງກ່າວ ລວມມີການປັບຫຼຸດອັດຕາດອກເບ້ຍນະໂຍບາຍ, ການຊື້ຊັບສິນທາງການເງິນເພື່ອສະໜອງສະພາບຄ່ອງໃຫ້ຫຼາຍຂຶ້ນ ແລະ ຫຼຸດຜ່ອນຜົນກະທົບຕໍ່ຄວາມຕ້ອງການມວນລວມ. ໃນຂະນະດຽວກັນນັ້ນ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບຜ່ອນຄາຍ ແລະ ມີມາດຕະການຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ເພື່ອຊ່ວຍຫຼຸດຜ່ອນຜົນກະທົບ ແລະ ຊຸກຍູ້ການຟື້ນຕົວທາງດ້ານເສດຖະກິດ.

ບົດລາຍງານເສດຖະກິດປະຈຳປີສະບັບນີ້ ໄດ້ນຳສະເໜີໃຫ້ເຫັນເຖິງສະພາບເສດຖະກິດຂອງ ສປປ ລາວ ໃນປີ 2020 ແລະ ບັນດານະໂຍບາຍສຳຄັນ, ໂດຍເນັ້ນໃສ່ຂໍ້ມູນທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງທະນາຄານແຫ່ງ ສປປ ລາວ ເປັນຕົ້ນຕໍ.

ໃນປີ 2020, ລັດຖະບານຂອງ ສປປ ລາວ ສາມາດສະກັດກັ້ນການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ໄດ້ດີສົມຄວນ. ເຖິງຢ່າງໃດກໍຕາມ, ສະພາບການແຜ່ລະບາດດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ສະພາບເສດຖະກິດ ແລະ ການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາຢ່າງຫຼີກລ່ຽງບໍ່ໄດ້. ການປິດຊາຍແດນລະຫວ່າງປະເທດ, ການຈຳກັດການເຄື່ອນຍ້າຍ ແລະ ການກັກກັນທີ່ຈຳເປັນ ເພື່ອສະກັດກັ້ນການແຜ່ລະບາດໄດ້ເລີ່ມຕົ້ນໃນທ້າຍໄຕມາດທຳອິດ ບວກກັບການແຜ່ລະບາດຂອງພະຍາດດັ່ງກ່າວທີ່ກຳລັງຂະຫຍາຍວົງກວ້າງໃນປະເທດໃກ້ຄຽງທີ່ມີຊາຍແດນຕິດຈອດ ແລະ ປະເທດອື່ນໆໃນຂົງເຂດ ໄດ້ສົ່ງຜົນເຮັດໃຫ້ລາຍຮັບຂອງປະເທດຫຼຸດລົງ ໂດຍສະເພາະແມ່ນລາຍຮັບຈາກການທ່ອງທ່ຽວ, ດ້ານການຂົນສົ່ງ, ດ້ານການຂາຍຍ່ອຍ, ດ້ານການບໍລິການທີ່ຢູ່ອາໄສ, ແລະ ອຸດສາຫະກຳປຸງແຕ່ງ ຊຶ່ງໄດ້ສ້າງຄວາມຫຍຸ້ງຍາກດ້ານການເງິນງົບປະມານເພີ່ມ

[1] ບົດລາຍງານທ່າອ່ຽງເສດຖະກິດໂລກ ຂອງກອງທຶນການເງິນສາກົນ ໃນເດືອນ ເມສາ 2021.

ຂຶ້ນ, ເຮັດໃຫ້ຄວາມອາດສາມາດຂອງລັດຖະບານໃນການຈັດຕັ້ງປະຕິບັດແຜນການກະຕຸ້ນເສດຖະກິດມີຂີດຈຳກັດ, ໃນຂະນະທີ່ ໄພພິບັດທາງທຳມະຊາດໃນໄຕມາດທີ່ຜ່ານມາ ໄດ້ເຮັດໃຫ້ຜົນຜະລິດກະສິກຳຂອງປະເທດຫຼຸດລົງ. ເຖິງຢ່າງໃດກໍຕາມ ຄຽງຄູ່ກັບຂໍ້ຈຳກັດຕ່າງໆ, ການຊຳລະກັບຕ່າງປະເທດ ກໍຍັງສາມາດຮັກສາດຸນການຄ້າ ສຳລັບສິນຄ້າ ແລະ ບໍລິການ ທີ່ມີທ່າອ່ຽງດີຂຶ້ນ ຍ້ອນມູນຄ່າການນຳເຂົ້າຫຼຸດລົງ. ນອກຈາກນີ້, ກະແສເງິນທຶນຂອງການລົງທຶນໂດຍກົງຈາກຕ່າງປະເທດ ຍັງສືບຕໍ່ໄຫຼເຂົ້າ (ສຸດທິ) ສູ່ຂະແໜງໄຟຟ້າ ແລະ ໂຄງການທາງລົດໄຟ ລາວ-ຈີນ. ສິ່ງທ້າທາຍໃນການຄຸ້ມຄອງສະຖຽນລະພາບດ້ານເງິນຕາອັນຕົ້ນຕໍແມ່ນການທີ່ເສດຖະກິດຍັງເອື່ອຍອີງໃສ່ການນຳເຂົ້າຍ້ອນການຜະລິດບໍ່ທັນຂະຫຍາຍຕົວ ແລະ ມີຄວາມຕ້ອງການເງິນຕາຕ່າງປະເທດເພື່ອຊຳລະກັບຕ່າງປະເທດຍັງມີສູງເກີນຄວາມສາມາດໃນການສະໜອງ ຈຶ່ງເຮັດໃຫ້ອັດຕາແລກປ່ຽນເງິນກີບອ່ອນຄ່າລົງ ທຽບໃສ່ສະກຸນເງິນຫຼັກ ແລະ ເງິນສະກຸນປະເທດຄູ່ຄ້າ.

ຈາກສະພາບການຄືດັ່ງກ່າວ, ເສດຖະກິດຂອງ ສປປ ລາວ ຂະຫຍາຍຕົວໃນລະດັບ 3,3%, ຊຶ່ງເປັນການຂະຫຍາຍຕົວຕ່ຳສຸດນັບແຕ່ປີ 1990 ເຖິງປັດຈຸບັນ. ໃນຂະນະດຽວກັນ, ອັດຕາເງິນເຟີ້ສະເລ່ຍມີທ່າອ່ຽງເພີ່ມຂຶ້ນ ຍ້ອນການເພີ່ມຂຶ້ນຂອງລາຄາສິນຄ້າທີ່ນຳເຂົ້າ ແລະ ຕ່ອງໂສ້ການຜະລິດ ແລະ ການສະໜອງທີ່ຖືກກະທົບ.

ນັບແຕ່ມີການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ໃນຕົ້ນປີ 2020, ເພື່ອຮັກສາສະຖຽນລະພາບອັດຕາແລກປ່ຽນ ແລະ ການຄຸ້ມຄອງກະແສທຶນໃນໄລຍະກ່ອນເກີດການລະບາດ, ທຫລ ໄດ້ນຳໃຊ້ນະໂຍບາຍເງິນຕາ ແລະ ບັນດາເຄື່ອງມືນະໂຍບາຍ ເພື່ອຫຼຸດຜ່ອນຜົນກະທົບຕໍ່ກັບກິດຈະກຳທາງເສດຖະກິດ ແລະ ສະຖຽນລະພາບທາງດ້ານລາຄາ. ໂດຍສະເພາະການປັບຫຼຸດອັດຕາດອກເບ້ຍນະໂຍບາຍ ແລະ ອັດຕາສ່ວນເງິນແຮຝາກບັງຄັບໃນເດືອນມີນາ 2020, ການຈັດຕັ້ງປະຕິບັດນະໂຍບາຍຊຸກຍູ້ສິນເຊື່ອສຳລັບຜູ້ທີ່ໄດ້ຮັບຜົນກະທົບ ແລະ ຄວາມຍືດຍຸ່ນທາງດ້ານເສດຖະກິດ ໂດຍອອກບົດແນະນຳໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອເລື່ອນການຊຳລະຕົ້ນທຶນ ແລະ ດອກເບ້ຍ, ການປັບໂຄງສ້າງໜີ້ສິນ ແລະ ຊຸກຍູ້ການສະໜອງເງິນກູ້ບ້ວງໃໝ່, ຄຽງຄູ່ກັບການສະໜັບສະໜູນໂຄງການການເງິນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ. ນອກນັ້ນ, ທຫລ ຍັງໄດ້ສືບຕໍ່ຈັດຕັ້ງປະຕິບັດພາລະບົດບາດຂອງຕົນໃນການສົ່ງເສີມໃຫ້ທຸກຫົວໜ່ວຍທຸລະກິດເຂົ້າເຖິງແຫຼ່ງທຶນຂອງທະນາຄານ ແລະ ສະຖາບັນການເງິນຫຼາຍຂຶ້ນ, ປັບປຸງລະບົບການຊຳລະໄປຄຽງຄູ່ກັບການພັດທະນາຕະຫຼາດທຶນໃຫ້ເຕີບໃຫຍ່ເຂັ້ມແຂງ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ໄດ້ປະກອບສ່ວນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ 3,3%, ທຫລ ສາມາດບັນລຸບັນດາຄາດໝາຍທີ່ຕິດພັນກັບຂະແໜງການທະນາຄານ ສຳລັບປີ 2020 ທີ່ສະພາແຫ່ງຊາດໄດ້ຮັບຮອງ. ຍອດເງິນຝາກຂອງທະນາຄານທຸລະກິດ ກວມເອົາ 64,62% ຂອງ GDP, ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານ ກວມເອົາ 48,94% ຂອງ GDP ແລະ ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ຂອງບັນດາທະນາຄານທຸລະກິດ ຢູ່ໃນລະດັບ 3,16%; ປະລິມານເງິນ (M2) ຂະຫຍາຍຕົວ 16,33%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າ 4,81 ເດືອນ; ການອ່ອນຄ່າຂອງເງິນກີບ (LAK) ເມື່ອທຽບກັບເງິນໂດລາສະຫະລັດ ແມ່ນເກີນເປົ້າໝາຍທີ່ກຳນົດໄວ້ເລັກນ້ອຍ (ແຜນ: ເໜັງຕີງຢູ່ໃນຂອບ ±5% ທຽບໃສ່ເງິນສະກຸນຫຼັກ); ອັດຕາເງິນເຟີ້ ຢູ່ໃນລະດັບ 5,07%.

ສໍາລັບປີ 2021, ລັດຖະບານຄາດວ່າເສດຖະກິດຈະສືບຕໍ່ຂະຫຍາຍຕົວເພີ່ມຂຶ້ນໃນລະດັບ 3,8%. ເພື່ອບັນລຸເປົ້າໝາຍການຟື້ນຟູທາງດ້ານເສດຖະກິດແບບຍືນຍົງ, ມີຄວາມຈໍາເປັນຕ້ອງຄວບຄຸມໂລກລະບາດຢູ່ພາຍໃນປະເທດ ແລະ ບັນດາປະເທດຄູ່ຮ່ວມການຄ້າ ແລະ ການລົງທຶນທີ່ສໍາຄັນຢ່າງເຄັ່ງຄັດ, ພ້ອມທັງການປະຕິບັດນະໂຍບາຍທີ່ເໝາະສົມທາງດ້ານການເງິນ, ເງິນຕາ ແລະ ການສົ່ງເສີມການລົງທຶນ. ເພື່ອສາມາດບັນລຸຕາມຄາດໝາຍຄືດັ່ງກ່າວ, ທຫລ ຈະສືບຕໍ່ຕິດຕາມຢ່າງໃກ້ຊິດຕໍ່ກັບສະພາບການແຜ່ລະບາດຂອງພະຍາດອັກເສບປອດ COVID-19, ຜົນກະທົບໃນອາດີດຕໍ່ກັບຂະແໜງເງິນຕາ-ການເງິນ ແລະ ການຈັດຕັ້ງປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ. ທະນາຄານແຫ່ງ ສປປ ລາວ ເວລາໃດກໍກຽມພ້ອມໃນການຈັດຕັ້ງປະຕິບັດມາດຕະການເພີ່ມເຕີມຕ່າງໆຕາມສະພາບຄວາມເປັນຈິງແຕ່ລະໄລຍະ ແນໃສ່ເພື່ອຫຼຸດຜ່ອນຄວາມສ່ຽງ, ຮັບປະກັນການຮັກສາສະຖຽນລະພາບດ້ານເງິນຕາ ແລະ ສືບຕໍ່ສະໜັບສະໜຸນການຂະຫຍາຍຕົວຂອງເສດຖະກິດຢ່າງໜັກແໜ້ນ.


ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ

I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ

ໃນຊຸມປີຜ່ານມາ, ສປປ ລາວ ສາມາດຮັກສາການຂະຫຍາຍຕົວຂອງເສດຖະກິດໄດ້ຢ່າງແຂງແຮງ, ແຕ່ເນື່ອງຈາກການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ໄດ້ເຮັດໃຫ້ກິດຈະກຳທາງເສດຖະກິດຫຼຸດລົງຢ່າງຫຼວງຫຼາຍ. ການຂະຫຍາຍຕົວເສດຖະກິດ ຫຼຸດລົງມາເປັນ 3,3% ໃນປີ 2020, ຈາກ 5,46% ໃນປີຜ່ານມາ. ສາເຫດແມ່ນມາຈາກຂະແໜງການບໍລິການທີ່ຫຼຸດລົງ. ໃນຂະນະທີ່, ຂະແໜງພະລັງງານໄຟຟ້າ ຍັງເປັນຕົວຂັບເຄື່ອນທີ່ສຳຄັນຂອງເສດຖະກິດ (ຮູບສະແດງ 1 ແລະ ຕາຕະລາງຊ້ອນທ້າຍ 1). ໃນປີ 2020, ມູນຄ່າລວມຍອດຜະລິດຕະພັນພາຍໃນ (ຕາມລາຄາໃນປີ) ເພີ່ມຂຶ້ນຈາກ 162.657 ຕື້ກີບ ໃນປີ 2019, ມາເປັນ 172.612 ຕື້ກີບ ແລະ ລາຍໄດ້ສະເລ່ຍຕໍ່ຫົວຄົນ ສາມາດບັນລຸໄດ້ 24 ລ້ານກີບ ຫຼື 2.642 ໂດລາສະຫະລັດ. (ຕາຕະລາງຊ້ອນທ້າຍ 2).

ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2016 - 2020




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.1. ຂະແໜງອຸດສາຫະກຳ

ໃນປີ 2020, ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 9,2%, ສູງກວ່າປີ 2019 (5,6%) ຊຶ່ງກວມເອົາ 33,3% ຂອງ GDP ແລະ ໄດ້ປະກອບສ່ວນຕໍ່ການຂະຫຍາຍຕົວຂອງເສດຖະກິດຫຼາຍທີ່ສຸດ. ຂະແໜງທີ່ເປັນທ່າແຮງໃນການຂັບເຄື່ອນ ແລະ ສະໜັບສະໜຸນເສດຖະກິດ ແມ່ນຂະແໜງພະລັງງານໄຟຟ້າ ແລະ ການກໍ່ສ້າງ ເພີ່ມຂຶ້ນ 20,5% ແລະ 14,5% ຕາມລຳດັບ (ຮູບສະແດງ 2). ການຂະຫຍາຍຕົວຂອງຂະແໜງພະລັງງານໄຟຟ້າ ມາຈາກການຜະລິດພະລັງງານກະແສໄຟຟ້າຂອງເຂື່ອນໃຫຍ່ໆໃນ ສປປ ລາວ ເພີ່ມຂຶ້ນຫຼາຍກວ່າທີ່ຄາດຄະເນໄວ້. ການພັດທະນາຂອງຂະແໜງການກໍ່ສ້າງ ແມ່ນໄດ້ຮັບການສະໜັບສະໜຸນຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ທີ່ສຳເລັດແລ້ວປະມານ 91% ຂອງແຜນການທີ່ວາງໄວ້. ຂະແໜງການຍ່ອຍຂອງການຜະລິດ ຂະຫຍາຍຕົວ 23,4%. ເຖິງຢ່າງໃດກໍ່ຕາມ, ຂະແໜງການຍ່ອຍຂອງບໍ່ແຮ່ ແລະ ການຂຸດຄົ້ນ ຫຼຸດລົງ -16,7%. (ຕາຕະລາງຊ້ອນທ້າຍ 2)

ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.2. ຂະແໜງກະສິກຳ

ໃນປີ 2020, ຂະແໜງກະສິກຳ ເພີ່ມຂຶ້ນ 1,2%, ເທົ່າກັບການເພີ່ມຂຶ້ນຂອງປີຜ່ານມາ ຊຶ່ງກວມເອົາ 16,5% ຂອງ GDP ແລະ ໄດ້ປະກອບສ່ວນໃນການຂະຫຍາຍຕົວຂອງເສດຖະກິດເປັນອັນດັບທີສອງ. ປັດໄຈຂັບເຄື່ອນທີ່ສຳຄັນຂອງການຜະລິດກະສິກຳ ລວມມີ ການລ້ຽງສັດ, ການປະມົງ, ແລະ ຂະແໜງປ່າໄມ້. ໃນທາງກົງກັນຂ້າມ, ການປູກຝັງ ແມ່ນໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມໃນໄຕມາດສຸດທ້າຍຂອງປີ ແລະ ໄດ້ຫຼຸດລົງ ນັບແຕ່ປີ 2019. (ຮູບສະແດງ 3 ແລະ ຕາຕະລາງຊ້ອນທ້າຍ 2)

ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.3. ຂະແໜງບໍລິການ

ໃນປີ 2020, ຂະແໜງການບໍລິການ ຫົດຕົວລົງ -1.2%, ໂດຍຫຼຸດລົງຈາກ 6,9% ໃນປີຜ່ານມາ ຊຶ່ງ ກວມເອົາ 39,6% ຂອງ GDP ແລະ ເປັນການຫຼຸດອັດຕາການຂະຫຍາຍຕົວຂອງເສດຖະກິດລົງ -0,5%. ໃນ ຊຸມປີຜ່ານມາ, ການຜະລິດໃນຂະແໜງບໍລິການ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກມາດຕະການປ້ອງກັນ ການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ເປັນຕົ້ນແມ່ນຂະແໜງການດ້ານທີ່ພັກອາໄສ ແລະ ອາ ຫານ ຫຼຸດລົງ 55%; ຂະແໜງການດ້ານການຂົນສົ່ງ ແລະ ສາງ ຫຼຸດລົງ 2,9%. ປັດໄຈຂັບເຄື່ອນສຳຄັນຂອງການ ຂະຫຍາຍຕົວຂະແໜງການບໍລິການ ລວມມີດ້ານການບໍລິຫານ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະ ຫງົບ, ດ້ານການຄ້າຂາຍຍົກ ແລະ ຂາຍຍ່ອຍ, ແລະ ດ້ານການສື່ສານ ແລະ ການສຶກສາ. (ຮູບສະແດງ 4 ແລະ ຕາຕະລາງຊ້ອນທ້າຍ 2)

ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.4. ອັດຕາເງິນເຟີ້

ເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ, ອັດຕາເງິນເຟີ້ສະເລ່ຍ ເພີ່ມຂຶ້ນຈາກ 3,32% ໃນປີຜ່ານມາ ມາເປັນ 5,07%, ເປັນຜົນສະທ້ອນມາຈາກອຸປະສົງພາຍໃຕ້ຄວາມອ່ອນແອທາງດ້ານການຜະລິດພາຍໃນປະເທດ ແລະ ຂອບຈຳກັດດ້ານການປິດເມືອງ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ Covid-19 ໃນບັນດາປະເທດ, ສິ່ງດັ່ງກ່າວ ໄດ້ເຮັດໃຫ້ອຸປະສົງພາຍໃນປະເທດສູງຂຶ້ນ ໂດຍສະເພາະສະບຽງອາຫານ, ສິນຄ້າອຸປະໂພກ-ບໍລິ ໂພກ, ຢາປົວພະຍາດ ແລະ ຜະລິດຕະພັນການຢາ ແລະ ອຸປະກອນທາງການແພດ ໃນຂະນະທີ່ ຕ່ອງໂສ້ການສະ ໜອງໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ. ພ້ອມກັນນັ້ນ, ລາຄາສິນຄ້ານຳເຂົ້າທີ່ເພີ່ມສູງຂຶ້ນ ຈາກຜົນກະທົບການແຜ່ລະບາດຂອງພະຍາດອັກເສບປອດ Covid-19, ການອ່ອນຄ່າຂອງອັດຕາແລກປ່ຽນສົ່ງ ຜົນໃຫ້ຕົ້ນທຶນການຜະລິດພາຍໃນສູງຂຶ້ນ ຊຶ່ງການນຳເຂົ້າມີບົດບາດສຳຄັນໃນຂະບວນການຜະລິດ. ນອກຈາກ ນີ້, ອັດຕາເງິນເຟີ້ຍັງໄດ້ຮັບແຮງກົດດັນຈາກປັດໄຈດ້ານຈິດວິທະຍາ ເນື່ອງຈາກຄວາມວິຕົກກັງວົນຕໍ່ການ

ລະບາດຂອງພະຍາດ Covid-19 ແລະ ຂອບຈຳກັດຕໍ່ການຜະລິດພາຍໃນ, ສິ່ງຜົນກະທົບຕໍ່ກັບລະດັບລາຄາພາຍໃນປະເທດສູງຂຶ້ນຕໍ່ເນື່ອງ. (ຮູບສະແດງ 5 ແລະ ຕາຕະລາງຊ້ອນທ້າຍ 4).


ຮູບສະແດງ 5. ເງິນເຟີ້ພື້ນຖານ ແລະ ເງິນເຟີ້ບໍ່ເປັນພື້ນຖານ, ເງິນເຟີ້ສິນຄ້າພາຍໃນ ແລະ ເງິນເຟີ້ສິນຄ້ານຳເຂົ້າ



ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ນອກຈາກນັ້ນ, ເງິນເຟີ້ທີ່ບໍ່ເປັນພື້ນຖານ ມີທ່າອ່ຽງເພີ່ມຂຶ້ນສູງ ເນື່ອງຈາກການເພີ່ມຂຶ້ນຂອງລາຄາສະບຽງອາຫານພາຍໃນປະເທດ ແລະ ລາຄານ້ຳມັນໃນຕະຫຼາດສາກົນ. ການປະກອບສ່ວນຂອງບາງໝວດສິນຄ້າ ຕໍ່ອັດຕາເງິນເຟີ້ລວມ: ໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ 3,93%, ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ 0,25%, ໝວດຄົມມະນາຄົມ ແລະ ການຂົນສົ່ງ 0,19%, ໝວດທີ່ຢັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີ້ງຫຸງຕົ້ມ 0,03%, ແລະ ໝວດຮ້ານອາຫານ ແລະ ໂຮງແຮມ -0,08%.

ຮູບສະແດງ 6. ການປະກອບສ່ວນຂອງໝວດສິນຄ້າຕໍ່ອັດຕາເງິນເຟີ້ລວມ ໄລຍະ 5 ປີຜ່ານມາ



ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

II. ຂະແໜງການເງິນຂອງລັດ


2.1. ຖານະການເງິນຂອງລັດ

ການຂະຫຍາຍຕົວຂອງເສດຖະກິດທີ່ຊ້າລົງ ແລະ ການສູນເສຍການເກັບລາຍຮັບຈາກພາສີ-ອາກອນ ສິ່ງຜົນເຮັດໃຫ້ການເກັບລາຍຮັບງົບປະມານມີທ່າອ່ຽງຫຼຸດລົງຢ່າງຫຼວງຫຼາຍ, ແລະ ດຸນງົບປະມານສືບຕໍ່ຂາດດຸນເພີ່ມຂຶ້ນ. ຕໍ່ສະພາບດັ່ງກ່າວ, ການຈັດຕັ້ງປະຕິບັດມາດຕະການຜ່ອນຜັນເພື່ອຫຼຸດຜ່ອນຜົນກະທົບການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ເປັນຕົ້ນ ການຍົກເວັ້ນອາກອນລາຍໄດ້ ແລະ ອາກອນກຳໄລ ໄດ້ສິ່ງຜົນເຮັດໃຫ້ລາຍຮັບງົບປະມານຫຼຸດລົງ ແລະ ຖານະການເງິນຂອງລັດຖະບານຂາດດຸນຈາກ 3,25% ໃນປີ 2019 ມາເປັນຂາດດຸນ 5,22% ໃນປີນີ້.

2.2. ລາຍຮັບງົບປະມານ

ໃນປີ 2020, ລາຍຮັບງົບປະມານປະຕິບັດໄດ້ 21.845,75 ຕື້ກີບ (ໃນນີ້, ລາຍຮັບພາຍໃນ ປະຕິບັດໄດ້ 19.215,59 ຕື້ກີບ, ເງິນຊ່ວຍເຫຼືອລ້າ 2.565,28 ຕື້ກີບ ແລະ ເງິນປະກອບສ່ວນຂອງສັງຄົມ 64,88 ຕື້ກີບ), ກວມອັດຕາສ່ວນ 12,66% ຂອງ GDP. ສາເຫດຕົ້ນຕໍມາຈາກລາຍຮັບພາຍໃນຫຼຸດລົງ ເປັນຕົ້ນແມ່ນການຫຼຸດລົງຂອງການເກັບລາຍຮັບຈາກພາສີຂາອອກ, ຄ່າການສະຫງວນປ່າໄມ້, ຄ່າບິນຜ່ານ, ຄ່າພາກຫຼວງໄຟຟ້າ, ດອກເບ້ຍ, ເງິນປັນຜົນ ແລະ ຄ່າຫຼ້ຽໜ້ຽນ, ຄ່າສຳປະທານ, ອາກອນຊົມໃຊ້, ຄ່າເຊົ່າ, ອາກອນກຳໄລ, ອາກອນລາຍໄດ້, ອາກອນມູນຄ່າເພີ່ມ, ອາກອນຊັບພະຍາກອນທຳມະຊາດ, ແລະ ອາກອນທີ່ດິນ (ຮູບສະແດງ 7 ແລະ ຕາຕະລາງຊ້ອນທ້າຍ 6). ພ້ອມກັນນັ້ນ, ລັດຖະບານໄດ້ມີມາດຕະການຜ່ອນຜັນການເກັບອາກອນເງິນເດືອນ, ອາກອນຊົມໃຊ້ໄຟຟ້າ, ແລະ ອາກອນກຳໄລຈາກຫົວໜ່ວຍວິສາຫະກິດ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຈາກການແຜ່ລະບາດຂອງພະຍາດອັກເສບປອດ Covid-19.

ຮູບສະແດງ 7. ລາຍຮັບງົບປະມານ




ແຫຼ່ງຂໍ້ມູນ: ກະຊວງການເງິນ.

2.3. ລາຍຈ່າຍງົບປະມານ

ໃນປີ 2020, ລາຍຈ່າຍງົບປະມານທັງໝົດ ປະຕິບັດໄດ້ 30.858,17 ຕື້ກີບ, ເພີ່ມຂຶ້ນ 0,77% ທຽບກັບປີຜ່ານມາ, ກວມອັດຕາສ່ວນ 17,88% ຕໍ່ GDP. ສາເຫດຍ້ອນການຈຳກັດລາຍຈ່າຍບໍລິຫານລົງ, ການເພີ່ມຂຶ້ນຂອງລາຍຈ່າຍລົງທຶນ 10,38% ທຽບກັບປີຜ່ານມາ, ແລະ ການໃຊ້ຈ່າຍເພື່ອສັງຄົມໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງເຊື້ອພະຍາດ, ການຊົດເຊີຍເງິນເດືອນຂອງພະນັກງານທີ່ໄດ້ເຂົ້າຮ່ວມອົງການປະກັນສັງຄົມ, ການຢຸດວຽກ ຕະຫຼອດຮອດການຫວ່າງງານ.

ຮູບສະແດງ 8. ລາຍຈ່າຍງົບປະມານ




ແຫຼ່ງຂໍ້ມູນ: ກະຊວງການເງິນ.

2.4. ດຸ່ນດ່ຽງງົບປະມານ

ການດຸ່ນດ່ຽງງົບປະມານຂອງລັດຖະບານ ມີມູນຄ່າ 9.012,42 ຕື້ກີບ. ປະກອບດ້ວຍ ແຫຼ່ງທຶນຈາກຕ່າງປະເທດ (ສຸດທິ) 4.220,26 ຕື້ກີບ ແລະ ແຫຼ່ງທຶນພາຍໃນ (ສຸດທິ) 4.792,16 ຕື້ກີບ (ຮູບສະແດງ 9). ໃນນັ້ນ, ການຈຳໜ່າຍພັນທະບັດພາຍໃນ ມີມູນຄ່າ 6.916,61 ຕື້ກີບ (ຕາຕະລາງຊ້ອນທ້າຍ 5).

ຮູບສະແດງ 9. ດຸ່ນດ່ຽງງົບປະມານ



ແຫຼ່ງຂໍ້ມູນ: ກະຊວງການເງິນ.

III. ຂະແໜງເງິນຕາ-ການເງິນ

3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ແລະ ປະກອບສ່ວນແກ້ໄຂບັນຫາຜົນກະທົບຈາກການແຜ່ລະບາດຂອງພະຍາດອັກເສບປອດ Covid-19, ທຫລ ໄດ້ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ດ້ວຍການປັບຫຼຸດອັດຕາດອກເບ້ຍນະໂຍບາຍ ແລະ ອັດຕາສ່ວນເງິນແຮຝາກບັງຄັບ. ໃນເດືອນມີນາ 2020, ທຫລ ໄດ້ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບຈາກ 5% ເປັນ 4% ສຳລັບເງິນກີບ ແລະ 10% ເປັນ 8% ສຳລັບເງິນຕາຕ່າງປະເທດ, ແນໃສ່ເພື່ອປັບປຸງສະພາບຄ່ອງຂອງທະນາຄານທຸລະກິດ. ໃນຂະນະດຽວກັນ, ທຫລ ໄດ້ສືບຕໍ່ປັບຫຼຸດອັດຕາດອກເບ້ຍພື້ນຖານຂອງ ທຫລ ລົງ 1%, ຈາກ 4% ມາເປັນ 3%, ເພື່ອແນໃສ່ປັບຫຼຸດອັດຕາດອກເບ້ຍຊື້-ຂາຍຝາກ ແລະ ອັດຕາດອກເບ້ຍຊື້-ຂາຍຂາດຕົວ ແລະ ຊັບສິນທາງການເງິນອື່ນໆ. ສຳລັບນະໂຍບາຍອັດຕາແລກປ່ຽນ, ທຫລ ສືບຕໍ່ນຳໃຊ້ລະບອບນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເປັນເຄື່ອງມືຕົ້ນຕໍໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ດ້ວຍການສືບຕໍ່ກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ (ເງິນກີບທຽບເງິນໂດລາ) ເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ປະຕິບັດໃນຂອບເຂດ ±0,25% ແລະ ກຳນົດສ່ວນຕ່າງລະຫວ່າງອັດຕາຊື້-ຂາຍ ສຳລັບເງິນກີບທຽບກັບເງິນເອີໂຣ 0,50%, ເງິນກີບທຽບກັບເງິນບາດ 0,75% ແລະ 2% ສຳລັບເງິນກີບທຽບສະກຸນເງິນຕາອື່ນໆ.


ນອກຈາກນີ້, ທຫລ ໄດ້ອອກຂໍ້ຕົກລົງກ່ຽວກັບນະໂຍບາຍສິນເຊື່ອເພື່ອຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19, ສະບັບເລກທີ 238/ທຫລ ລົງວັນທີ 26 ມີນາ 2020, ຊຶ່ງປະກອບດ້ວຍ 4 ມາດຕະການທີ່ສຳຄັນ ເຊັ່ນ: ການເລື່ອນການຊຳລະຕົ້ນທຶນ ແລະ ດອກເບ້ຍ, ຊຸກຍູ້ໃຫ້ທະນາຄານທຸລະກິດ ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມ, ຊຸກຍູ້ໃຫ້ທະນາຄານທຸລະກິດສະໜອງສິນເຊື່ອບ້ວງໃໝ່ເພື່ອຟື້ນຟູເສດຖະກິດ, ແລະ ການປັບໂຄງສ້າງສິນເຊື່ອ.

ທຫລ ໄດ້ອອກແຈ້ງການ ວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19, ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020, ຊຶ່ງມີຈຸດປະສົງເພື່ອກະຕຸ້ນເສດຖະກິດ ແລະ ຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ໂດຍການສະໜອງເງິນກູ້ດ້ວຍອັດຕາດອກເບ້ຍຕ່ຳ 5,5% ແລະ ມີໄລຍະເວລາ 6 ປີ. ສຳລັບໂຄງການສິນເຊື່ອດັ່ງກ່າວ ຈະຖືກຈັດຕັ້ງປະຕິບັດເປັນເວລາ 18 ເດືອນ ແລະ ຖືກຄຸ້ມຄອງໂດຍທະນາຄານທຸລະກິດ.

ເຖິງຢ່າງໃດກໍຕາມ, ການຈັດຕັ້ງປະຕິບັດບັນດາມາດຕະການຂອງ ທຫລ ໄດ້ປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ຄື: 1) ທຫລ ໄດ້ຈັດຕັ້ງປະຕິບັດໂຄງການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs), ແຕ່ວ່າສິນເຊື່ອດັ່ງກ່າວອາດຈະບໍ່ພຽງພໍສຳລັບການຮັກສາສະພາບຄ່ອງທາງດ້ານການເງິນຂອງບັນດາວິສາຫະກິດ ຖ້າວ່າຜົນກະທົບຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ພ້ອມທັງມາດຕະການຮັກສາໄລຍະຫ່າງ ແລະ ມາດຕະການຈຳກັດການເດີນທາງໄດ້ຖືກຈັດຕັ້ງປະຕິບັດໃນໄລຍະກາງ ແລະ ໄລຍະຍາວ; 2) ທຫລ ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບຜ່ອນຄາຍ ໂດຍການປັບຫຼຸດອັດຕາດອກເບ້ຍ

ນະໂຍບາຍ ແລະ ອັດຕາສ່ວນເງິນແຮຝາກບັງຄັບ ເພື່ອກະຕຸ້ນການປ່ອຍສິນເຊື່ອຂອງທະນາຄານທຸລະກິດ, ແຕ່ ທະນາຄານທຸລະກິດ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢ່າງຫ້າວຫັນ ເນື່ອງຈາກຄວາມກັງວົນກ່ຽວກັບການປ່ອຍ ສິນເຊື່ອທີ່ອາດຈະເປັນໜີ້ບໍ່ເກີດດອກອອກຜົນ (NPL); ແລະ 3) ການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ແມ່ນສິ່ງທ້າທາຍໃຫ້ແກ່ການດຳເນີນນະໂຍບາຍອັດຕາແລກປ່ຽນ, ໂດຍສະເພາະໃນການຮັກສາ ສະຖຽນລະພາບເງິນຕາແຫ່ງຊາດ. ນັບແຕ່ການແຜ່ລະບາດໃນທ້າຍປີ 2019, ເສດຖະກິດໂລກມີຄວາມຜັນ ຜວນ, ອັດຕາແລກປ່ຽນເງິນໂດລາສະຫະລັດທຽບໃສ່ 6 ສະກຸນເງິນຫຼັກ ມີທ່າອ່ຽງແຂງຄ່າ, ລາຄາຫຸ້ນ, ລາຄາ ສິນຄ້າ ແລະ ລາຄານ້ຳມັນ ມີການຜັນຜວນ. ນອກຈາກນັ້ນ, ເສດຖະກິດຂອງ ສປປ ລາວ ທີ່ເນັ້ນໃສ່ການນຳເຂົ້າ ພ້ອມທັງການປົດຊາຍແດນ ເຮັດໃຫ້ມີຄວາມຕ້ອງການເງິນຕາຕ່າງປະເທດເພື່ອຊຳລະສະສາງພາຍໃນປະເທດ. ຈາກປັດໄຈທັງພາຍໃນ ແລະ ສາກົນ ໄດ້ສົ່ງຜົນເຮັດໃຫ້ຄ່າເງິນກີບອ່ອນຄ່າທຽບກັບເງິນຕາຕ່າງປະເທດ. ໃນປີ 2020, ເງິນກີບ ອ່ອນຄ່າ 6,23% ທຽບເງິນໂດລາສະຫະລັດ ແລະ ອ່ອນຄ່າ 8,15% ທຽບເງິນບາດ (ຮູບສະແດງ 10 ແລະ ຕາຕະລາງຊ້ອນທ້າຍ 16).

ຮູບສະແດງ 10. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.2. ຖານເງິນຕາ

ຖານເງິນຕາ ເພີ່ມຂຶ້ນ 18,82% ຈາກ 27.325,26 ຕື້ກີບ ໃນປີ 2019, ມາເປັນ 32.469,17 ຕື້ກີບ ໃນປີ 2020. ໃນນີ້, ຊັບສິນຕ່າງປະເທດ (ສຸດທິ) ເພີ່ມຂຶ້ນຈາກ 30,10%ໃນປີ 2019, ມາເປັນ 35,65%ໃນປີ 2020, ໃນຂະນະທີ່ ຊັບສິນພາຍໃນ (ສຸດທິ) ຫຼຸດລົງຈາກ 69,90%, ມາເປັນ 64,35% (ຮູບສະແດງ 11). ການ ຂະຫຍາຍຕົວຂອງຊັບສິນຕ່າງປະເທດ (ສຸດທິ) ເນື່ອງຈາກ ທຫທ ໄດ້ຮັບເງິນຈາກຕ່າງປະເທດ, ສ່ວນການຫຼຸດ ລົງຂອງຊັບສິນພາຍໃນ (ສຸດທິ) ຍ້ອນ ທຫລ ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ ໄຂຜົນກະທົບຈາກການແຜ່ລະບາດຂອງພະຍາດອັກເສບປອດ Covid-19 (ຮູບສະແດງ 7).

ຮູບສະແດງ 11. ໂຄງປະກອບຂອງຖານເງິນຕາ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

3.3. ປະລິມານເງິນ

ປະລິມານເງິນ (M2) ເພີ່ມຂຶ້ນ 16,33% ຈາກ 96.186,33 ຕື້ກີບ ໃນປີ 2019, ມາເປັນ 111.895,01 ຕື້ກີບໃນປີ 2020. ຊຶ່ງກວມອັດຕາສ່ວນ 64,82% ຕໍ່ GDP. ການຂະຫຍາຍຕົວຂອງປະລິມານເງິນ (M2) ໃນປີ 2020 ແມ່ນສູງກວ່າຊ່ວງໄລຍະກ່ອນໜ້າຂອງການແຜ່ລະບາດຂອງພະຍາດອັກເສບປອດ Covid-19 (2018-19), ທີ່ສະທ້ອນໃຫ້ເຫັນວ່າ ການນຳໃຊ້ນະໂຍບາຍເງິນຕາແບບຜ່ອນຄາຍ ເພື່ອຊ່ວຍກະຕຸ້ນເສດຖະກິດ ແລະ ສະພາບຄວາມຫຍຸ້ງຍາກດ້ານງົບປະມານທີ່ຈຳກັດ. ການຂະຫຍາຍຕົວຂອງປະລິມານເງິນ (M2) ສ່ວນໃຫຍ່ ແມ່ນມາຈາກເງິນຝາກທີ່ເປັນສະກຸນເງິນຕາຕ່າງປະເທດ ແລະ ເງິນຝາກປະຈຳ ແລະ ເງິນຝາກປະຢັດ, ສິ່ງຜົນເຮັດໃຫ້ການນຳໃຊ້ເງິນຕາຕ່າງປະເທດສູງ ເປັນຕົ້ນ ເງິນໂດລາສະຫະລັດ ແລະ ເງິນບາດ. ອັດຕາສ່ວນທີ່ເປັນສະກຸນເງິນຕາຕ່າງປະເທດ ຕໍ່ (M2) ເພີ່ມຂຶ້ນຈາກ 49,35% ໃນປີ 2019, ມາເປັນ 50,69% ໃນປີ 2020 (ຮູບສະແດງ 12 ແລະ ຕາຕະລາງຊ້ອນທ້າຍ 9).

ສິນເຊື່ອໃຫ້ພາກສ່ວນເສດຖະກິດ ຂະຫຍາຍຕົວ 4,29% ຈາກ 81.007,30 ຕື້ກີບໃນປີ 2019, ມາເປັນ 84.480,76 ຕື້ກີບໃນປີ 2020 (ຕາຕະລາງຊ້ອນທ້າຍ 20). ສິ່ງດັ່ງກ່າວ ສະທ້ອນໃຫ້ເຫັນຜົນຂອງການດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ແລະ ນະໂຍບາຍຊຸກຍູ້ສິນເຊື່ອ, ໃນຂະນະທີ່ ການສະໜອງສິນເຊື່ອຂອງທະນາຄານທຸລະກິດໃນໄລຍະທີ່ສະພາບເສດຖະກິດມີຄວາມຫຍຸ້ງຍາກ ແລະ ຂອບຈຳກັດຕໍ່ກັບຊ່ອງທາງສົ່ງຜ່ານຂອງນະໂຍບາຍເງິນຕາ ເນື່ອງຈາກລະບົບການເງິນ-ເງິນຕາ ກຳລັງພັດທະນາ.

ຮູບສະແດງ 12. ການຂະຫຍາຍຕົວຂອງປະລິມານເງິນ (M2)




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.4. ອັດຕາດອກເບ້ຍ

ໃນປີ 2020, ທຫລ ສືບຕໍ່ອະນຸຍາດໃຫ້ທະນາຄານທຸລະກິດ ກຳນົດອັດຕາດອກເບ້ຍເງິນກູ້ ແລະ ເງິນຝາກທຸກສະກຸນຂອງຕົນ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບຜ່ອນຄາຍ ດ້ວຍການປັບຫຼຸດອັດຕາດອກເບ້ຍນະໂຍບາຍ ແລະ ອັດຕາສ່ວນເງິນແຮຝາກບັງຄັບ ເພື່ອຊຸກຍູ້ການສະໜອງສິນເຊື່ອຂອງທະນາຄານທຸລະກິດ. ເຖິງຢ່າງໃດກໍຕາມ, ອັດຕາດອກເບ້ຍເງິນກູ້ຂອງທະນາຄານທຸລະກິດ ຍັງບໍ່ທັນຫຼຸດລົງເທົ່າທີ່ຄວນ ເນື່ອງຈາກຄວາມກັງວົນຕໍ່ຄວາມສ່ຽງໜີ້ບໍ່ເກີດດອກອອກຜົນ ແລະ ຄຳນຶງຕໍ່ຫຼັກການບໍລິຫານທຶນໃນການດຳເນີນທຸລະກິດທະນາຄານຊ່ວງໄລຍະການແຜ່ລະບາດຂອງພະຍາດອັກເສບປອດ Covid-19. ດັ່ງໃນຕາຕະລາງຊ້ອນທ້າຍ 10, ອັດຕາດອກເບ້ຍເງິນຝາກ ມີທ່າອ່ຽງຫຼຸດລົງ, ສ່ວນອັດຕາດອກເບ້ຍເງິນກູ້ ມີທ່າອ່ຽງເພີ່ມຂຶ້ນ. ໃນນັ້ນ, ອັດຕາດອກເບ້ຍເງິນຝາກ 1 ປີ ຄົງທີ່ໃນລະດັບ 5,37% ສຳລັບສະກຸນເງິນກີບ ແລະ ຫຼຸດລົງເລັກນ້ອຍສຳລັບສະກຸນເງິນບາດ ແລະ ສຳລັບສະກຸນເງິນໂດລາສະຫະລັດ ຈາກ 3,61% ມາເປັນ 3,48%, ແລະ ຈາກ 3,80% ມາເປັນ 3,72%, ຕາມລຳດັບ. ສຳລັບອັດຕາດອກເບ້ຍເງິນກູ້ໄລຍະສັ້ນ 1 ປີ ເພີ່ມຂຶ້ນຈາກ 9,47% ມາເປັນ 9,79%, ສະກຸນເງິນບາດ ເພີ່ມຂຶ້ນຈາກ 8,07% ມາເປັນ 8,39% ແລະ ສະກຸນເງິນໂດລາສະຫະລັດ ເພີ່ມຂຶ້ນຈາກ 7,70% ມາເປັນ 8,15%. (ຮູບສະແດງ 13 ແລະ ຕາຕະລາງຊ້ອນທ້າຍ 10)

ຮູບສະແດງ 13. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.5. ເງິນຝາກ

ໃນປີ 2020, ເງິນຝາກຂອງ ທທກ (ບໍ່ລວມເງິນຝາກຂອງບຸກຄົນທີ່ມີຖິ່ນຖານຢູ່ຕ່າງປະເທດ) ຢູ່ໃນລະດັບ 102.520,80 ຕື້ກີບ, ຂະຫຍາຍຕົວ 17,09% ທຽບກັບປີຜ່ານມາ, ກວມອັດຕາສ່ວນ 59,39% ຕໍ່ GDP. ໃນນີ້, ຍອດເງິນຝາກເປັນສະກຸນເງິນກີບ ຂະຫຍາຍຕົວ 14,25% ແລະ ກວມອັດຕາສ່ວນ 44,68% ຂອງຍອດເງິນຝາກທັງໝົດ, ແລະ ຍອດເງິນຝາກເປັນສະກຸນເງິນຕາຕ່າງປະເທດ ຂະຫຍາຍຕົວ 19,48%, ແລະ ກວມອັດຕາສ່ວນ 55,32% ຂອງຍອດເງິນຝາກທັງໝົດ, (ຮູບສະແດງ 14 ແລະ ເອກະສານຊ້ອນທ້າຍ 11).

ຮູບສະແດງ 14. ໂຄງປະກອບຂອງເງິນຝາກ ໃນໄລຍະ 5 ປີ ຜ່ານມາ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.6. ສິນເຊື່ອ

ມາຮອດທ້າຍປີ 2020, ສິນເຊື່ອໃຫ້ພາກສ່ວນເສດຖະກິດຂອງທະນາຄານທຸລະກິດ ມີຍອດເຫຼືອ ຢູ່ໃນລະດັບ 78.237,87 ຕື້ກີບ, ຂະຫຍາຍຕົວ 4,84% ທຽບກັບປີຜ່ານມາ, ກວມອັດຕາສ່ວນ 43,33% ຕໍ່ GDP. ໃນນີ້, ສິນເຊື່ອໃຫ້ພາກເອກະຊົນ ຂະຫຍາຍຕົວ 5,48%, ສ່ວນສິນເຊື່ອໃຫ້ລັດວິສາຫະກິດ ຫຼຸດລົງ 2,43%.

ການປະກອບສ່ວນຂອງສິນເຊື່ອແຍກຕາມຂະແໜງການ ຕໍ່ການຂະຫຍາຍຕົວຂອງສິນເຊື່ອ ມີຄື: ຂະແໜງບໍລິການ 2,58%, ຂະແໜງອຸດສາຫະກຳ 0,97%, ຂະແໜງກໍ່ສ້າງ 0,68%, ຂະແໜງຂົນສົ່ງ 0,48%, ຂະແໜງອື່ນໆ 0,43%, ຂະແໜງຫັດຖະກຳ -0,11%, ຂະແໜງສະໜອງວັດຖຸ ແລະ ເຕັກນິກ -0,08%, ຂະແໜງການຄ້າ -0,07%, ແລະ ຂະແໜງກະສິກຳ -0,06% (ຮູບສະແດງ 15 ແລະ ຕາຕະລາງຊ້ອນທ້າຍ 12).

ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.7. ລະບົບສະຖາບັນການເງິນ-ເງິນຕາ

ເພື່ອປ້ອງກັນຜົນກະທົບດ້ານລົບຂອງໂລກລະບາດ, ການຮັກສາສະຖຽນລະພາບທາງດ້ານເງິນຕາແມ່ນໜຶ່ງໃນຈຸດປະສົງຫຼັກຂອງ ທຫລ ທີ່ຕ້ອງບັນລຸ. ເພື່ອຫຼຸດຜ່ອນຄວາມກົດດັນທີ່ເພີ່ມຂຶ້ນຕໍ່ໜີ້ສິນຂອງຄົວເຮືອນ, ທຫລ ໄດ້ອອກຂໍ້ຕົກລົງ ວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບພະຍາດ Covid-19. ຈຸດປະສົງແມ່ນເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງແຫຼ່ງທຶນສິນເຊື່ອໃຫ້ແກ່ບຸກຄົນ ແລະ ວິສາຫະກິດຂະໜາດກາງ ແລະ ນ້ອຍ (SMEs) ເພື່ອດຳເນີນທຸລະກິດຂອງພວກເຂົາ ໃນໄລຍະການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ແລະ ມາດຕະການຄວບຄຸມຂອງລັດຖະບານ. ນອກຈາກນັ້ນ, ທຫລ ໄດ້ອອກແຈ້ງການກ່ຽວກັບໂຄງການສິນເຊື່ອເພື່ອສົ່ງເສີມການຜະລິດແຫ່ງຊາດ ແລະ ເອົາໃຈໃສ່ໃນການຄຸ້ມຄອງທະນາຄານທຸລະກິດ ເພື່ອຮັບປະກັນຄວາມຄ່ອງຕົວໃນການບໍລິການຂອງທະນາຄານທຸລະກິດພາຍໃນ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໂດຍການອອກແຈ້ງການທົບທວນຄືນ, ປະເມີນຄືນກົດລະບຽບທະນາຄານທຸລະກິດ ແລະ ສາຂາທະນາຄານ 1 ສະບັບ[2]. ນອກຈາກນັ້ນ, ທຫລ ສືບຕໍ່ຈັດຕັ້ງປະຕິບັດການຕິດຕາມຄຸ້ມຄອງ

[2] ສະບັບເລກທີ 352/ກຄທ, ລົງວັນທີ 17 ມີຖຸນາ 2020.

ທະນາຄານໃຫ້ສອດຄ່ອງກັບລະບຽບຂອງທະນາຄານ ໄປຄຽງຄູ່ກັບການພັດທະນາໄປສູ່ການຄຸ້ມຄອງຕາມຫຼັກການ Basel II ແລະ Basel III ໂດຍໄດ້ເຜີຍແຜ່ແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດໄປສູ່ການຄຸ້ມຄອງຕາມມາດຕະຖານ Basel ແຕ່ປີ 2017-2025. ພ້ອມກັນນັ້ນ, ທຫລ ໄດ້ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ໃຫ້ບັນດາທະນາຄານທຸລະກິດ ດຳເນີນການກວດສອບພາຍນອກ ແລະ ເຜີຍແຜ່ຖານະການເງິນຂອງຕົນໃນຮູບແບບຕ່າງໆ ເຊັ່ນ: ບົດລາຍງານປະຈຳປີຜ່ານເວັບໄຊ, ແຜ່ນພັບ ແລະ ສື່ສິ່ງພິມໂຄສະນາຕ່າງໆ ເພື່ອຮັບປະກັນໃນການສ້າງຄວາມເຊື່ອໝັ້ນ ແລະ ໂປ່ງໃສໃນລະບົບທະນາຄານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້ບໍລິການ. ນິຕິກຳຫຼາຍສະບັບໄດ້ຖືກພັດທະນາ ແລະ ປັບປຸງ ເພື່ອເປັນເຄື່ອງມືໃນການຄຸ້ມຄອງຄວາມປອດໄພຂອງລະບົບທະນາຄານ ແນໃສ່ຮັບປະກັນການເຊື່ອມໂຍງຂອງຂະແໜງການທະນາຄານກັບບັນດາປະເທດໃນພາກພື້ນ ແລະ ສາກົນ. ເຖິງແມ່ນວ່າ ມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດອັກເສບປອດ Covid-19, ທຫລ ໄດ້ຮັບປະກັນໃຫ້ມີການບໍລິການດ້ານການເງິນຢ່າງຕໍ່ເນື່ອງ ໂດຍໄດ້ຊຸກຍູ້ຮຽກຮ້ອງໃຫ້ບັນດາທະນາຄານທຸລະກິດມີການຈັດແບ່ງປ່ຽນກັນ ເພື່ອໃຫ້ບໍລິການດ້ານການເງິນຢ່າງຄ່ອງຕົວປົກກະຕິ. ໃນຂະນະດຽວກັນ, ທຫລ ສືບຕໍ່ຊຸກຍູ້ໃຫ້ທະນາຄານທຸລະກິດຂະຫຍາຍຕາໜ່າງບໍລິການ ໂດຍມີການປັບປຸງ ແລະ ພັດທະນາບັນດາຜະລິດຕະພັນທີ່ນຳໃຊ້ເທັກໂນໂລຊີຜ່ານລະບົບມືຖືໃຫ້ຫຼາຍຂຶ້ນ ແນໃສ່ອຳນວຍຄວາມສະດວກໃນການບໍລິການຊຳລະສະສາງໃຫ້ມີຄວາມທັນສະໄໝ, ວ່ອງໄວ ແລະ ຮັບປະກັບຄວາມປອດໄພ ເຊັ່ນ: Internet Banking, Mobile Banking, SMS Banking, ການຊຳລະດ້ວຍ QR code ແລະ E-Wallet.

ປີ 2020, ລະບົບສະຖາບັນການເງິນ-ເງິນຕາ ປະກອບມີ 44 ທະນາຄານທຸລະກິດ[3] (ຕາຕະລາງ 18), ມີ 115 ສາຂາຂອງທະນາຄານທຸລະກິດ, ໜ່ວຍບໍລິການ 538 ແຫ່ງ, ໜ່ວຍແລກປ່ຽນເງິນຕາ 42 ແຫ່ງ, ຕູ້ ATM 1.336 ແຫ່ງ, ເຄື່ອງຮູດບັດ EDC ຈຳນວນ 4.578 ເຄື່ອງ ຢູ່ໃນຂອບເຂດທົ່ວປະເທດ ແລະ ບັດ ATM ຈຳນວນ 1.629.448 ບັດ. ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີທັງໝົດ 191 ແຫ່ງ[4] (ຕາຕະລາງ 19), ເພີ່ມຂຶ້ນ 8 ແຫ່ງ ແລະ ມີຍອດຊັບສິນທັງໝົດ 2.119,83 ຕື້ກີບ[5], ເພີ່ມຂຶ້ນ 2,93% ທຽບກັບທ້າຍປີຜ່ານມາ, ສາມາດລະດົມເງິນຝາກໄດ້ 1.411,68 ຕື້ກີບ[6], ຫຼຸດລົງ -4,54% ແລະ ສາມາດສະໜອງສິນເຊື່ອໃຫ້ແກ່ສັງຄົມໄດ້ 1.388,82 ຕື້ກີບ[7], ເພີ່ມຂຶ້ນ 9,72% ທຽບກັບທ້າຍປີຜ່ານມາ.

[3] ໃນນີ້, ມີ 3 ທະນາຄານທຸລະກິດລັດ; ມີ 1 ທະນາຄານສະເພາະກິດ; ມີ 3 ທະນາຄານຮ່ວມທຶນ; ມີ 8 ທະນາຄານເອກະຊົນ; ມີ 8 ທະນາຄານທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ; ແລະ ມີ 21 ສາຂາທະນາຄານທຸລະກິດຕ່າງປະເທດ.

[4] ໃນນັ້ນ, ມີ 21 ສະຖາບັນການເງິນທີ່ຮັບເງິນຝາກ, ເພີ່ມຂຶ້ນ 1 ແຫ່ງ; ມີ 83 ສະຖາບັນການເງິນທີ່ບໍ່ຮັບຝາກ, ເພີ່ມຂຶ້ນ 6 ແຫ່ງ; ມີ 28 ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ຫຼຸດລົງ 2 ແຫ່ງ; ມີ 29 ບໍລິສັດເຊົ່າສິນເຊື່ອ; ມີ 30 ໂຮງຊວດຈຳ, ຫຼຸດລົງ 3 ແຫ່ງ ແລະ ມີ 3 ບໍລິສັດໂອນເງິນດ່ວນ.

[5] ລວມມີຍອດຊັບສິນຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ທີ່ບໍ່ຮັບຝາກ ແລະ ສະຫະກອນສິນເຊື່ອ-ເງິນຝາກປະຢັດ.

[6] ລວມມີເງິນຝາກຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ທີ່ບໍ່ຮັບຝາກ ແລະ ສະຫະກອນສິນເຊື່ອ-ເງິນຝາກປະຢັດ.

[7] ລວມມີສິນເຊື່ອຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ທີ່ບໍ່ຮັບຝາກ ແລະ ສະຫະກອນສິນເຊື່ອ-ເງິນຝາກປະຢັດ.

ກ່ຽວກັບການພັດທະນາຕະຫຼາດທຶນ, ທຫລ ໄດ້ອອກແຈ້ງການ[8]ອະນຸຍາດໃຫ້ທະນາຄານທຸລະກິດສາມາດໄປລົງທຶນໃນຕະຫຼາດຫຼັກຊັບຢູ່ພາຍໃນ ແລະ ຕ່າງປະເທດ. ພ້ອມກັນນັ້ນ, ທຫລ ສືບຕໍ່ເອົາໃຈໃສ່ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ບໍລິສັດຈົດທະບຽນໃຫ້ເຄື່ອນໄຫວສອດຄ່ອງຕາມລະບຽບຫຼັກການ ແນໃສ່ເພື່ອຫຼຸດຜ່ອນຄວາມສ່ຽງດ້ານລົບຕໍ່ຕະຫຼາດທຶນ. ໃນປີ 2020, ດັດຊະນີຕະຫຼາດຫຼັກຊັບລາວປິດທີ່ 598.70 ຈຸດ, ຫຼຸດລົງ -17.77 %; ການຊື້-ຂາຍຫຼັກຊັບມີມູນຄ່າທັງໝົດ 72,89 ຕື້ກີບ, ຫຼຸດລົງ -1,52% ທຽບໃສ່ປີ 2019. ໃນນັ້ນມູນຄ່າການຊື້-ຂາຍຂອງນັກລົງທຶນຕ່າງປະເທດກວມເອົາ 58,67% ຂອງມູນຄ່າການຊື້ຂາຍທັງໝົດ. ຕໍ່ສະພາບການດັ່ງກ່າວ, ທຫລ ຈະສືບຕໍ່ຈັດຕັ້ງປະຕິບັດການພັດທະນາຕະຫຼາດທຶນລາວໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ເພື່ອກາຍເປັນແຫຼ່ງລະດົມທຶນໄລຍະຍາວຢ່າງແທ້ຈິງ, ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນໃຫ້ກັບຄືນສູ່ຕະຫຼາດທຶນພາຍຫຼັງການແກ້ໄຂຜົນກະທົບການແຜ່ລະບາດຂອງພະຍາດອັກເສບປອດ Covit-19 ພ້ອມທັງພັດທະນາໃຫ້ສາມາດກ້າວໄປຄຽງຄູ່ກັບຕະຫຼາດການເງິນຢ່າງໝັ້ນຄົງ.

IV. ດຸນການຊຳລະກັບຕ່າງປະເທດ


4.1. ດຸນການຊຳລະລວມ

ການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ໄດ້ສົ່ງຜົນກະທົບຕໍ່ໂຄງປະກອບທີ່ແຕກຕ່າງກັນຂອງລະບົບດຸນການຊຳລະກັບຕ່າງປະເທດ ໃນປີ 2020 ຄື: ດຸນຊຳລະປົກກະຕິຂາດດຸນ ໃນລະດັບ 115,23 ລ້ານໂດລາສະຫະລັດທຽບເທົ່າ ແລະ ກວມເອົາ 0,6% ຕໍ່ GDP. ໃນຂະນະທີ່, ດຸນບັນຊີທຶນ ແລະ ການເງິນ ມີກະແສເງິນໄຫຼເຂົ້າ ສຸດທິ ໃນລະດັບ 1.179,96 ລ້ານໂດລາສະຫະລັດທຽບເທົ່າ ແລະ ກວມເອົາ 6,19% ຕໍ່ GDP (ຮູບສະແດງ 16 ແລະ ຕາຕະລາງຊ້ອນທ້າຍ 13). ໃນທ້າຍປີ 2020 ຄັງສຳຮອງເງິນຕາຕ່າງປະເທດຢູ່ໃນລະດັບ 1.319,17 ລ້ານໂດລາສະຫະລັດ ສາມາດກຸ້ມການນຳເຂົ້າສິນຄ້າທີ່ບໍ່ແມ່ນ FDI ໄດ້ເປັນເວລາ 4,81 ເດືອນ[9].

[8] ສະບັບເລກທີ 251/ທຫລ, ລົງວັນທີ 08 ເມສາ 2020.

[9] ມູນຄ່າສິນຄ້ານຳເຂົ້າທີ່ບໍ່ລວມ FDI ສະເລ່ຍຕໍ່ເດືອນໃນປີ 2020 ແມ່ນນຳໃຊ້ 274,04 ລ້ານໂດລາສະຫະລັດ (ຕົວເລກຄາດຄະເນ) ຊຶ່ງເປັນຕົວເລກທີ່ນຳໃຊ້ລະດັບການນຳເຂົ້າທີ່ບໍ່ລວມການລົງທຶນໂດຍກົງຈາກຕ່າງປະເທດ ເນື່ອງຈາກໂຄງການທີ່ກ່ຽວຂ້ອງກັບ FDI ເປັນການໃຊ້ທຶນຂອງຕົນເອງ ຊຶ່ງບໍ່ໄດ້ກ່ຽວຂ້ອງກັບຄັງສຳຮອງເງິນຕາຕ່າງປະເທດ.

ຮູບສະແດງ 16. ດຸນການຊຳລະກັບຕ່າງປະເທດ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

4.2. ດຸນບັນຊີຊຳລະປົກກະຕິ


ໃນປີ 2020, ດຸນບັນຊີຊຳລະປົກກະຕິ ຂາດດຸນໃນລະດັບ 115,23 ລ້ານໂດລາສະຫະລັດທຽບເທົ່າ ຊຶ່ງ ຂາດດຸນຫຼຸດລົງຈາກ 1.319,56 ລ້ານໂດລາສະຫະລັດທຽບເທົ່າ ແລະ ຫຼຸດລົງ 91,27% ເມື່ອທຽບກັບປີຜ່ານ ມາ. ສາເຫດມາຈາກດຸນການຄ້າເກີນດຸນ, ດຸນລາຍຮັບຂັ້ນສອງ ເກີນດຸນຫຼຸດລົງ, ດຸນລາຍຮັບຂັ້ນໜຶ່ງ ຂາດດຸນ ຫຼຸດລົງ, ແລະ ດຸນບໍລິການ ຂາດດຸນເພີ່ມຂຶ້ນ (ຮູບສະແດງ 17 ແລະ ຕາຕະລາງຊ້ອນທ້າຍ 13).

ພ້ອມກັນນັ້ນ, ມູນຄ່າການຄ້າຢູ່ໃນລະດັບ 11.485,33 ລ້ານໂດລາສະຫະລັດທຽບເທົ່າ ໃນປີ 2020, ຫຼຸດລົງ 4,91% ທຽບກັບປີຜ່ານມາ. ພ້ອມກັນນັ້ນ, ດຸນການຄ້າ ເກີນດຸນໃນລະດັບ 744,54 ລ້ານໂດລາສະຫະ ລັດທຽບເທົ່າ ເນື່ອງຈາກການສົ່ງອອກໄຟຟ້າເພີ່ມຂຶ້ນ ແລະ ການນຳເຂົ້າຫຼຸດລົງຍ້ອນຄວາມຕ້ອງການພາຍໃນ ຫຼຸດລົງ. ມູນຄ່າການສົ່ງອອກ ມີມູນຄ່າ 6.114,93 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 5,32% ທຽບກັບ ປີຜ່ານມາ, ສິນຄ້າສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນກະແສໄຟຟ້າ ກວມເອົາ 30,39% ຂອງການສົ່ງອອກທັງໝົດ; ຮອງລົງມາແມ່ນຜະລິດຕະພັນແຮ່ທາດ ກວມເອົາ 22,61%; ຜະລິດຕະພັນກະສິກຳ ກວມເອົາ 12,75%; ອາ ຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 6,06%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 5,60%; ຜະລິດຕະພັນຈາກສັດ ກວມເອົາ 4,91%; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆກວມເອົາ 4,70% ຂອງການສົ່ງອອກທັງໝົດ.

ໃນຂະນະທີ່, ການນຳເຂົ້າ ມີມູນຄ່າ 5.370,40 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 14,37% ທຽບ ກັບປີຜ່ານມາ, ເນື່ອງຈາກຄວາມຕ້ອງການໃຊ້ຈ່າຍຫຼຸດລົງຍ້ອນມາດຕະການສະກັດກັ້ນການແຜ່ລະບາດຂອ. ພະ ຍາດອັກເສບປອດ Covid-19 ໃນການເຂັ້ມງວດການສັນຈອນເຄື່ອນຍ້າຍລະຫວ່າງປະເທດ. ຊຶ່ງການນຳເຂົ້າ ຫຼຸດລົງສ່ວນໃຫຍ່ແມ່ນການນຳເຂົ້າເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ; ຮອງລົງມາເຄື່ອງກົນຈັກ-ອຸປະ ກອນ; ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງເປັນຕົ້ນ.

ນອກຈາກນີ້, ສິນຄ້ານຳເຂົ້າຫຼັກ ໄດ້ແກ່ປະເພດອາຫານ, ເຄື່ອງດື່ມ,ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 14,50%; ຮອງລົງມາແມ່ນນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ ກວມເອົາ 11,77%; ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 11,45%; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ກວມເອົາ 10,72%; ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ ກວມເອົາ 9.81%; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 8.62% ຂອງການນຳເຂົ້າທັງໝົດ (ຕາຕະລາງຊ້ອນທ້າຍ 14).

ຮູບສະແດງ 17. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

4.3. ດຸນບັນຊີທຶນ ແລະ ບັນຊີການເງິນ

ໃນປີ 2020, ການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ສົ່ງຜົນກະທົບຕໍ່ກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ (FDI) ເນື່ອງຈາກການຈຳກັດການເດີນທາງທຸລະກິດຂ້າມຊາຍແດນ, ລວມທັງກະທົບຕໍ່ກະແສເງິນລົງທຶນໂດຍກົງ ເຂົ້າມາ ສປປ ລາວ. ເຖິງຢ່າງໃດກໍຕາມ, ບັນດາໂຄງການທີ່ກຳລັງດຳເນີນການ ເປັນຕົ້ນ ໂຄງການກໍ່ສ້າງ ຍັງສືບຕໍ່ມີກະແສທຶນເຂົ້າມາໃນຂົງເຂດເສດຖະກິດ ສົ່ງຜົນເຮັດໃຫ້ດຸນບັນຊີທຶນເກີນດຸນໃນລະດັບ 12,62 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ -15,06% ເມື່ອທຽບກັບປີຜ່ານມາ ແລະ ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າ (ສຸດທິ) 1.167,34 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ -39,93% ເມື່ອທຽບກັບປີຜ່ານມາ. ໃນນັ້ນ, ການລົງທຶນໂດຍກົງຈາກຕ່າງປະເທດ ມີກະແສເງິນໄຫຼເຂົ້າ (ສຸດທິ) 967,71 ລ້ານໂດລາສະຫະລັດທຽບເທົ່າ ແລະ ການລົງທຶນອື່ນໆມີກະແສເງິນໄຫຼເຂົ້າ (ສຸດທິ) 456,15 ລ້ານໂດລາສະຫະລັດທຽບເທົ່າ, ໃນຂະນະທີ່ການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼອອກ (ສຸດທິ) 256,51 ລ້ານໂດລາສະຫະລັດທຽບເທົ່າ (ຮູບສະແດງ 18 ແລະ ຕາຕະລາງຊ້ອນທ້າຍ 13). ນອກຈາກນີ້, ປະເທດທີ່ມາລົງທຶນໂດຍກົງຈາກຕ່າງປະເທດຢູ່ ສປປ ລາວ ຫຼາຍກ່ວາໝູ່ ປະກອບມີ ສປ. ຈີນ ກວມເອົາ 87,65%, ຮອງລົງມາແມ່ນປະເທດໄທ ກວມເອົາ 4,99% ແລະ ປະເທດຫວຽດນາມ ກວມເອົາ 2,52%. ສ່ວນການລົງທຶນໂດຍກົງຈາກຕ່າງປະເທດແຍກຕາມຂະແໜງການທີ່ມາລົງທຶນຫຼາຍກ່ວາໝູ່ ໃນປີ 2020 ແມ່ນຂະແໜງກໍ່ສ້າງ ກວມເອົາ 49,07%; ຮອງ

ລົງມາແມ່ນຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ ກວມເອົາ 18,50%; ຂະແໜງການເງິນ ກວມເອົາ 15,45% ແລະ ຂະແໜງການໄຟຟ້າ ກວມເອົາ 7,73% ຂອງການລົງທຶນ FDI ທັງໝົດ.

ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີການເງິນ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

4.4. ໜີ້ສິນຕ່າງປະເທດຂອງລັດຖະບານ

ຮອດທ້າຍປີ 2020 (ຕົວເລກເບື້ອງຕົ້ນ), ຍອດໜີ້ສິນຕ່າງປະເທດຂອງລັດຖະບານ ມີຈຳນວນ 10.610,34 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 6,79% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 55,66% ຕໍ່ GDP. ຍ້ອນແນວນັ້ນ, ໜີ້ສິນຕ່ຕາງປະເທດຂອງລັດຖະບານຍັງຢູ່ໃນລະດັບສູງ ແລະ ຢູ່ໃນສະຖານະທີ່ອ່ອນແອໃນຊຸມປີທີ່ຜ່ານມາ. ໃນນັ້ນ, ຍອດໜີ້ສິນຕ່ຕ່າງປະເທດທີ່ເປັນພັນທະບັດ ມີຈຳນວນ 1.387,25 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ -13,76% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 13,07% ຕໍ່ ຍອດໜີ້ສິນທັງໝົດ. ພ້ອມກັນນັ້ນ, ຍອດເງິນກູ້ຢືມ ມີຈຳນວນ 9.223,09 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 10,75% ເມື່ອທຽບໃສ່ປີຜ່ານມາ. ນອກຈາກນັ້ນ, ໂຄງປະກອບຂອງເງິນກູ້ຢືມຂອງລັດຖະບານ ປະກອບດ້ວຍ 3 ຮູບແບບ ໃນນັ້ນ, (1) ເປັນເງິນກູ້ຢືມຮູບແບບສອງຝ່າຍ ມີມູນຄ່າ 6.671,38 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 10,12% ແລະ ກວມອັດຕາສ່ວນຫຼາຍສຸດເຖິງ 62,88% ຂອງ ຍອດໜີ້ສິນທັງໝົດ; (2) ເປັນເງິນກູ້ຢືມຮູບແບບຫຼາຍຝ່າຍ ມີມູນຄ່າ 1.763,38 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 4,48% ແລະ ກວມອັດຕາສ່ວນ 16,62% ຂອງ ຍອດໜີ້ສິນທັງໝົດ ; ແລະ (3) ເປັນເງິນກູ້ຢືມທະນາຄານທຸລະກິດ ມີມູນຄ່າ 787,81 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 35,57% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 7,42% ຂອງຍອດໜີ້ສິນທັງໝົດ (ຮູບສະແດງ 19 ແລະ ຕາຕະລາງຊ້ອນທ້າຍ 15).

ຮູບສະແດງ 19. ໜີ້ສິນຕ່າງປະເທດ



ແຫຼ່ງຂໍ້ມູນ: ກະຊວງການເງິນ.

V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2021

ທຫລ ຄາດວ່າ ສະພາບເສດຖະກິດ ໃນປີ 2021 ຈະມີການຟື້ນຕົວເທື່ອລະກ້າວ, ສອດຄ່ອງກັບການຄາດຄະເນຂອງລັດຖະບານ ທີ່ຄາດວ່າ ເສດຖະກິດຈະຂະຫຍາຍຕົວໃນລະດັບ 3,8%, ໂດຍໄດ້ຮັບການຂັບເຄື່ອນຈາກໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່ທີ່ຍັງສືບຕໍ່ ແລະ ການສົ່ງອອກທີ່ຫຼາກຫຼາຍ ເປັນຕົ້ນແມ່ນ ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ບໍ່ເຕັນ, ໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ທີ່ມີແຜນຈະສຳເລັດ ແລະ ເປີດໃຫ້ບໍລິການໃນເດືອນທັນວາ 2021, ເຊິ່ງຈະເປັນສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຢູ່ພາຍໃນປະເທດໃຫ້ດີຂຶ້ນ; ໃນຂະນະທີ, ພາກການສົ່ງອອກ ຄາດວ່າຈະຄ່ອຍໆປັບຕົວດີຂຶ້ນ ຕາມການຟື້ນຕົວຂອງເສດຖະກິດບັນດາປະເທດຄູ່ຮ່ວມທາງການຄ້າ (ໂດຍສະເພາະ ສປ. ຈີນ, ສສ. ຫວຽດນາມ ແລະ ປະເທດໄທ). ກ່ຽວກັບຄວາມຄືບໜ້າການພັດທະນາດ້ານການສົ່ງອອກ, ສັນຍາຊື້ໄຟຟ້າທີ່ໄດ້ເຊັນກັນກ່ອນການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ຈະເປັນສິ່ງທີ່ຮັບປະກັນທາງດ້ານລາຍຮັບໃນການສົ່ງອອກກະແສພະລັງໄຟຟ້າ; ໃນຂະນະທີ່, ຄວາມຕ້ອງການມວນລວມຂອງໂລກ ແລະ ບັນຍາກາດການລົງທຶນພາຍໃນປະເທດ ຈະຊ່ວຍຍົກລະດັບການເກັບລາຍຮັບຈາກການສົ່ງອອກແຮ່ທາດ; ເຖິງຢ່າງໃດກໍຕາມ, ລາຍຮັບຈາກການທ່ອງທ່ຽວ ອາດຈະຍັງສືບຕໍ່ຫຼຸດລົງ. ສຳລັບດຸນບັນຊີຊຳລະປົກກະຕິ ຄາດວ່າຈະຂາດດຸນຫຼຸດລົງ ເນື່ອງຈາກການນຳເຂົ້າການບໍລິການຫຼຸດລົງ ແລະ ກະແສເງິນໄຫຼອອກ (ສຸດທິ) ຂອງດຸນລາຍໄດ້ຫຼຸດລົງ. ເນື່ອງຈາກອຸປະສົງພາຍໃນປະເທດຈະເຮັດໃຫ້ມີຄວາມຕ້ອງການຊົມໃຊ້ເພີ່ມຂຶ້ນ, ສົ່ງຜົນຕໍ່ລະດັບລາຄາສິນຄ້າ ແລະ ລາຄານ້ຳມັນເຊື້ອໄຟພາຍໃນປະເທດ, ຄວາມກົດດັນຕໍ່ອັດຕາແລກປ່ຽນ; ເງິນເຟີ້ ຄາດວ່າຈະຢູ່ໃນລະດັບຕ່ຳກວ່າ ໃນລະດັບ 5-7%. ສຳລັບງົບປະມານພາກລັດ, ການເພີ່ມຂຶ້ນຂອງໜີ້ຕ່າງປະເທດຂອງລັດຖະບານ ແລະ ການຂາດດຸນງົບປະມານຕໍ່ເນື່ອງ ຈະເປັນສິ່ງທີ່ເຝົ້າລະວັງຂອງກົດຈະກຳຕ່າງໆທາງເສດຖະກິດ.

ເພື່ອສືບຕໍ່ສະໜັບສະໜູນການຂະຫຍາຍຕົວຢ່າງໝັ້ນທ່ຽງ, ຊຸກຍູ້ການຟື້ນຕົວເສດຖະກິດຂອງ ສປປ ລາວ ແບບຍືນຍົງ, ການຄວບຄຸມການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ຢູ່ໃນ ສປປ ລາວ ແລະ ບັນດາປະເທດຄູ່ຮ່ວມທາງການຄ້າ ແລະ ການລົງທຶນທີ່ສຳຄັນ ພ້ອມທັງການຈັດຕັ້ງປະຕິບັດນະໂຍບາຍການເງິນ, ນະໂຍບາຍເງິນຕາ ແລະ ນະໂຍບາຍສົ່ງເສີມການລົງທຶນ ແມ່ນມີຄວາມສຳຄັນຫຼາຍ. ດັ່ງນັ້ນ, ທຫລ ຈະສືບຕໍ່ຕິດຕາມເຝົ້າລະວັງສະຖານະການການແຜ່ລະບາດຂອງພະຍາດອັກເສບປອດ Covid-19 ຢ່າງໃກ້ຊິດ ແລະ ຜົນກະທົບຕໍ່ກັບຂະແໜງການເງິນ ແລະ ຂົງເຂດເສດຖະກິດ-ສັງຄົມ. ໃນຂະນະທີ່, ກະກຽມວາງມາດຕະການເພີ່ມຕື່ມເພື່ອຫຼຸດຜ່ອນຄວາມສ່ຽງ, ຮັບປະກັນສະຖຽນລະພາບທາງດ້ານເງິນຕາ-ການເງິນ ແລະ ສະຖຽນລະພາບທາງດ້ານລາຄາ, ພ້ອມທັງສະໜັບສະໜູນຄວາມຍືດຍຸ່ນທາງດ້ານເສດຖະກິດໃນຕໍ່ໜ້າ.

ສະພາບໍລິຫານທະນາຄານແຫ່ງ ສປປ ລາວ

ທ່ານ ສອນໄຊ ສິດພະໄຊ	ຜູ້ວ່າການທະນາຄານແຫ່ງ ສປປ ລາວ; ປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ບຸນໂຈມ ອຸບົນປະເສີດ	ຮອງລັດຖະມົນຕີກະຊວງການເງິນ; ຮອງປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ນ. ວັດທະນາ ດາລາລອຍ	ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ຮອງປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ນ. ຄຳຈັນ ວົງແສນບຸນ	ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ສົມຈິດ ອິນທະມິດ	ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ	ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ນ. ທິບພະກອນ ທຳມະວົງສາ	ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່	ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.
ທ່ານ ຮສ. ປອ. ພູເພັດ ກ້ຽວພິລາວົງ	ຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ; ກຳມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ.

ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທ່ານ ສອນໄຊ ສິດພະໄຊ	ຜູ້ວ່າການທະນາຄານແຫ່ງ ສປປ ລາວ
ທ່ານ ຄຳວົງ ທິບພະວົງ	ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ
ທ່ານ ນ. ວັດທະນາ ດາລາລອຍ	ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ
ທ່ານ ພຸດທະໄຊ ສີວິໄລ	ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ

ຊ່ວຍວຽກຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທ່ານ ບຸນໄທ ສຸພັດທອນ	ຊ່ວຍວຽກຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ບັນດາຫົວໜ້າກົມ ຢູ່ທະນາຄານແຫ່ງ ສປປ ລາວ

ທ່ານ ເພັດສະຖາພອນ ແກ້ວວົງວິຈິດ	ຫົວໜ້າຫ້ອງການ
ທ່ານ ພານຸສັກ ແກ່ນວົງພະຈັນ	ຫົວໜ້າກົມຈັດຕັ້ງແລະພະນັກງານ
ທ່ານ ວຽງສະຫວັນ ໄຊຍະວົງ	ຫົວໜ້າກົມກວດກາພາຍໃນ
ທ່ານ ຄຳພຸດ ສິດທິລາດ	ຫົວໜ້າກົມນະໂຍບາຍເງິນຕາ
ທ່ານ ນ. ໂພທິຈັນ ທຳມະເທວາ	ວ່າການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ
ທ່ານ ອາລຸນ ບຸນຍົງ	ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ
ທ່ານ ຄຳແກ້ວ ວິສີສົມບັດ	ວ່າການຫົວໜ້າກົມບໍລິການທະນາຄານ
ທ່ານ ນ. ຟອງຈິນດາ ແສງສຸລິວົງ	ຫົວໜ້າກົມຮ່ວມມືສາກົນ
ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ	ຫົວໜ້າກົມບັນຊີ ແລະ ການເງິນ
ທ່ານ ບຸນທະວີ ສຸກດາວົງ	ວ່າການຫົວໜ້າກົມຜົມຈຳໜ່າຍ
ທ່ານ ໄຂ່ແກ້ວ ຫຼວງສີວິໄລ	ຫົວໜ້າເຕັກໂນໂລຊີຂໍ້ມູນຂ່າວສານ
ທ່ານ ໄຊລືຊາ ຜຸຍຍະວົງ	ວ່າການຫົວໜ້າກົມນິຕິກຳ
ທ່ານ ສຸລິສັກ ທຳນຸວົງ	ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ

ກົງຈັກການຈັດຕັ້ງທຽບເທົ່າກົມ ຢູ່ທະນາຄານແຫ່ງ ສປປ ລາວ

ທ່ານ ປອ. ສັນຕິ ພົນເມືອງລາວ	ຫົວໜ້າສະຖາບັນການທະນາຄານ
ທ່ານ ນ. ສາຍສະໝອນ ຈັນທະຈັກ	ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ນ. ແພງສີ ແພງເມືອງ	ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ
ທ່ານ ນ. ຄຳເຜີຍ ວໍລະເດດ	ວ່າການຫົວໜ້າໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ
ທ່ານ ນ. ທິບພາວັນ ຈັນທະຜາສຸກ	ວ່າການຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້


ກົງຈັກການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ

ທ່ານ ວິສອນ ໄຊສົງຄາມ	ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ
ທ່ານ ນອນຕາ ແກ້ວມະນີ	ຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ
ທ່ານ ວົງພະຈັນ ແສງສຸວັນ	ຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ
ທ່ານ ໂພຕະມີ ພຸດທະວົງ	ວ່າການຫົວໜ້າສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ
ທ່ານ ຄຳຊ່ຽນ ມີ່ງບຸບຜາ	ວ່າການຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ

ພາກສ່ວນທີ່ຂຶ້ນກັບການຊີ້ນຳຂອງທະນາຄານແຫ່ງ ສປປ ລາວ

ທ່ານ ນ. ແສງດາວວີ ວົງຄຳຊາວ	ຫົວໜ້າສຳນັກງານປົກປ້ອງເງິນຝາກ
ທ່ານ ອ໊ອດ ພົນຊຽງດີ	ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ທ່ານ ນ. ວົນຄຳ ລຸນທອນ	ຜູ້ອຳນວຍການໃຫຍ່ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

ແຜນວາດ. ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ



ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ

ລາຍການ	2016	2017	2018	2019(P)	2020(P)
ຂະແໜງການຜະລິດ (ການປ່ຽນແປງຄິດເປັນສ່ວນຮ້ອຍ)					
ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່*	7,02	6,85	6,29	5,46	3,28
ອັດຕາເງິນເຟີ້ທ້າຍປີ	2,49	0,15	1,48	6,28	3,19
ອັດຕາເງິນເຟີ້	1,60	0,83	2,04	3,32	5,07
ການເງິນຂອງລັດ (ເປີເຊັນຕໍ່ GDP)	**2016**	**2017**	**2018**	**2019(R)**	**2020(P)**
ລາຍຮັບງົບປະມານທັງໝົດ	16,37	16,28	15,71	15,58	12,66
ລາຍຮັບພາຍໃນ	15,02	14,62	14,30	13,84	11,13
ເງິນຊ່ວຍເຫຼືອລ້ຳ	1,35	1,67	1,41	1,74	1,49
ເງິນປະກອບສ່ວນຂອງສັງຄົມ	-	-	-	0,12	0,04
ລາຍຈ່າຍງົບປະມານທັງໝົດ	21,52	21,83	20,34	18,83	17,88
ລາຍຈ່າຍບໍລິຫານປົກກະຕິ	15,46	12,55	12,09	12,63	11,43
ລາຍຈ່າຍລົງທຶນ	6,07	9,29	8,25	6,19	6,44
ດຸນງົບປະມານ	-5,15	-5,55	-4,63	-3,25	-5,22
ດຸນງົບປະມານ (ບໍ່ລວມເງິນຊ່ວຍເຫຼືອລ້ຳ)	-6,51	-7,21	-6,04	-4,99	-6,74
ຂະແໜງເງິນຕາ (ການປ່ຽນແປງຄິດເປັນສ່ວນຮ້ອຍ)	**2016**	**2017**	**2018**	**2019(P)**	**2020(P)**
ປະລິມານເງິນ (M2)	10,90	12,23	8,37	18,85	16,33
ຂະແໜງການເງິນຕ່າງປະເທດ (ເປີເຊັນຕໍ່ GDP)	**2016(R)**	**2017(R)**	**2018(R)**	**2019(P)**	**2020(P)**
ດຸນການຊຳລະລວມ	-1,08	1,18	-0,79	0,66	1,68
ດຸນບັນຊີຊຳລະປົກກະຕິ	-8,71	-7,38	-9,10	-6,99	-0,60
ດຸນການຄ້າ	-7,09	-4,65	-5,00	-2,47	-3,89
ດຸນບັນຊີການເງິນ	-15,93	-12,73	-12,09	-10,30	-6,10
ຍອດໜີ້ສິນຕໍ່ຕ່າງປະເທດ	46,42	51,16	52,67	52,64	55,66
ຄັງສຳຮອງເງິນຕາຕ່າງປະເທດ (ລ້ານໂດລາສະຫະລັດ)	814,92	1.016,05	873,17	997,25	1.319,17
ຕົວເລກກຸ້ມການນຳເຂົ້າຕໍ່ເດືອນ (ບໍ່ລວມການນຳເຂົ້າສິນຄ້າຂອງໂຄງການຂະໜາດໃຫຍ່)	5,26	4,39	3,23	3,59	4,81

ໝາຍເຫດ: P ໝາຍເຖິງຕົວເລກເບື້ອງຕົ້ນ
R ໝາຍເຖິງຕົວເລກປັບປຸງໃໝ່
*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2012

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ; ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ.

ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ຄິດໄລ່ຕາມມູນຄ່າເພີ່ມ (ຕື້ກີບ)

ລາຍການ	2016	2017	2018	2019	2020(P)
ລວມຍອດຜະລິດຕະພັນພາຍໃນ ຕາມລາຄາໃນປີ	**129.279**	**140.698**	**152.414**	**162.657**	**172.612**
ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ (ໂດລາສະຫະລັດ)	**2.343**	**2.472**	**2.585**	**2.632**	**2.642**
ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ*	**7,02%**	**6,85%**	**6,29%**	**5,46%**	**3,28%**
ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່*	**108.916**	**116.377**	**123.696**	**130.447**	**134.720**
ກະສິກຳ	**17.254**	**17.750**	**17.974**	**18.194**	**18.404**
ປູກຝັງ	11.289	11.710	11.767	11.686	11.584
ລ້ຽງສັດ	2.301	2.437	2.510	2.637	2.772
ປ່າໄມ້	1.229	1.090	1.066	1.111	1.154
ປະມົງ	2.435	2.513	2.631	2.761	2.894
ອຸດສາຫະກຳ	**36.667**	**40.923**	**44.119**	**46.591**	**50.880**
ບໍ່ແຮ່ ແລະ ການຂຸດຄົ້ນ	11.052	10.579	9.891	9.885	8.233
ອຸດສະຫະກຳ ຜະລິດຕະພັນສະບຽງອາຫານ	1.645	1.721	1.792	1.902	1.928
ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ	1.627	1.627	1.703	1.814	1.870
ອຸດສະຫະກຳ ຜະລິດແຜ່ນແຜ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ	1.368	1.378	1.413	1.457	1.464
ອຸດສະຫະກຳປຸງແຕ່ງອື່ນໆ	4.331	4.642	5.044	5.449	6.724
ພະລັງງານໄຟຟ້າ	9.539	12.629	14.089	13.808	16.640
ນ້ຳປະປາ ແລະ ບຳບັດສິ່ງເສດເຫຼືອ	285	301	322	342	360
ການກໍ່ສ້າງ	6.820	8.046	9.864	11.936	13.661
ການບໍລິການ	**43.943**	**45.882**	**49.044**	**52.409**	**51.783**
ຂາຍຍົກ ຂາຍຍ່ອຍ, ສ້ອມແປງພາຫະນະ	14.516	15.566	17.231	18.658	18.899
ຂົນສົ່ງ ແລະ ສາງ	1.606	1.715	1.798	1.944	1.888
ກິດຈະກຳທີ່ພັກອາໄສ ແລະ ບໍລິການອາຫານ	3.162	3.010	3.242	3.502	1.574
ຂ່າວສານ ແລະ ການສື່ສານ	2.013	2.100	2.304	2.466	2.678
ກິດຈະກຳການເງິນ ແລະ ປະກັນໄພ	2.466	2.704	2.970	3.217	3.257
ກິດຈະກຳອະສັງຫາລິມະຊັບ	7.401	7.660	8.031	8.660	8.869
ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ	1.518	1.564	1.677	1.827	1.904
ລັດບໍລິຫານ, ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ	7.128	7.331	7.480	7.695	8.133
ການສຶກສາ	1.892	1.931	1.963	2.004	2.048
ສຸຂະພາບ ແລະ ສະຫວັດດີການສັງຄົມ	519	522	526	546	571
ບໍລິການອື່ນໆ	1.723	1.777	1.823	1.888	1.962
ລວມຍອດມູນຄ່າເພີ່ມທັງໝົດທຸກຂະແໜງການ	**97.865**	**104.555**	**111.138**	**117.194**	**121.067**
ພາສີອາກອນຜະລິດຕະພັນ, ສຸດທິ**	11.051	11.822	12.558	13.253	13.653

ໝາຍເຫດ: P ໝາຍເຖິງຕົວເລກເບື້ອງຕົ້ນ

*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2012

**: ອາກອນຕໍ່າສຸດ, ອາກອນຕົວເລກທຸລະກິດ, ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ພາສີນຳເຂົ້າ-ສົ່ງອອກ

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2015 = 100)

ໝວດສິນຄ້າ	2016	2017	2018	2019	2020
ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ	**101,30**	**102,14**	**104,23**	**107,69**	**113,15**
ທັງ 12 ໝວດ, ບໍ່ລວມນ້ຳມັນເຊື້ອໄຟ	**101,50**	**101,99**	**103,79**	**107,31**	**113,05**
ທັງ 12 ໝວດ, ບໍ່ລວມອາຫານສົດ	**100,23**	**101,78**	**104,62**	**106,85**	**109,21**
ທັງ 12 ໝວດ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ	**100,48**	**101,47**	**103,74**	**106,07**	**108,72**
ດັດຊະນີແຕ່ລະໝວດສິນຄ້າ					
1. ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ	102,66	102,57	103,84	108,70	117,98
2. ໝວດເຫຼົ້າ ແລະ ຢາສູບ	100,68	101,34	102,23	104,91	106,20
3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ	100,42	102,83	108,44	112,29	117,48
4. ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ	101,34	101,94	103,86	104,77	105,37
5. ໝວດເຄື່ອງໃຊ້ໃນເຮືອນ	100,52	101,59	102,92	105,27	110,23
6. ໝວດຮັກສາສຸຂະພາບ ແລະ ຢາ	100,20	101,16	102,30	103,92	109,12
7. ໝວດຄົມມະນາຄົມ ແລະ ການຂົນສົ່ງ	99,41	102,25	106,67	109,07	110,39
8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ	99,97	99,90	101,57	103,75	107,96
9. ໝວດການບັນເທີງ ແລະ ການພັກຜ່ອນ	100,10	100,25	100,26	102,45	104,21
10. ໝວດການສຶກສາ	100,13	100,58	101,05	102,00	102,87
11. ໝວດຮ້ານອາຫານ ແລະ ໂຮງແຮມ	100,78	101,93	104,40	106,43	105,41
12. ໝວດສິນຄ້າ ແລະ ການບໍລິການອື່ນໆ	100,67	102,04	103,55	106,59	115,76

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ຕາຕະລາງທີ 4. ອັດຕາເງິນເຟີ້ (%)

ໝວດສິນຄ້າ	2016	2017	2018	2019	2020
ເງິນເຟີ້ລວມ	**1,60**	**0,83**	**2,04**	**3,32**	**5,07**
ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ	**2,54**	**0,48**	**1,77**	**3,39**	**5,36**
ເງິນເຟີ້ລວມ, ບໍ່ລວມອາຫານສົດ	**-0,37**	**1,55**	**2,79**	**2,14**	**2,21**
ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ	**1,04**	**0,99**	**2,24**	**2,25**	**2,49**
ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ (%)					
1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ	4,29	-0,08	1,24	,24	8,53
2. ໝວດເຫຼົ້າ ແລະ ຢາສູບ	1,69	0,65	0,88	0,88	1,22
3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ	2,00	2,41	5,45	5,45	4,62
4. ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ	1,42	0,60	1,88	1,88	0,57
5. ໝວດເຄື່ອງໃຊ້ໃນເຮືອນ	0,58	1,07	1,31	1,31	4,71
6. ໝວດຮັກສາສຸຂະພາບ ແລະ ຢາ	2,58	0,96	1,12	1,13	5,00
7. ໝວດຄົມມະນາຄົມ ແລະ ການຂົນສົ່ງ	-3,53	2,86	4,33	4,33	1,21
8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ	0,08	-0,07	1,67	1,68	4,06
9. ໝວດການບັນເທີງ ແລະ ການພັກຜ່ອນ	0,28	0,14	0,01	0,02	1,72
10. ໝວດການສຶກສາ	0,18	0,45	0,47	0,47	0,85
11. ໝວດຮ້ານອາຫານ ແລະ ໂຮງແຮມ	1,44	1,15	2,42	2,42	-0,96
12. ໝວດສິນຄ້າ ແລະ ການບໍລິການອື່ນໆ	1,01	1,36	1,48	1,48	8,60

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ตาຕະລາງທີ 5. ຖານະການເງິນຂອງລັດ (ຕໍ່ກີບ)

ລາຍການ	2016	2017	2018	2019(R)	2020(P)
ລາຍຮັບລວມ	**21.162,83**	**22.925,01**	**23.943,78**	**25.340,53**	**21.845,75**
ລາຍຮັບພາຍໃນ	**19.413,88**	**20.579,48**	**21.795,66**	**22.511,34**	**19.215,59**
ລາຍຮັບພາສີອາກອນ	16.426,64	16.918,44	17.032,24	17.747,94	15.764,60
ລາຍຮັບບໍ່ແມ່ນພາສີອາກອນ	2.987,24	3.661,04	4.763,42	4.763,40	3.450,99
ເງິນຊ່ວຍເຫຼືອລ້ຳ	**1.748,95**	**2.345,53**	**2.148,12**	**2.632,19**	**2.565,28**
ເງິນຊ່ວຍເຫຼືອລ້ຳສຳລັບໂຄງການ	774,27	876,91	684,57	711,29	841,24
ເງິນຊ່ວຍເຫຼືອລ້ຳທີ່ບໍ່ແມ່ນສຳລັບໂຄງການ	974,68	1.360,01	1.142,00	1.736,00	1.724,04
ເງິນຊ່ວຍເຫຼືອລ້ຳທີ່ບໍ່ແມ່ນສຳລັບໂຄງການ (ຍີ່ປຸ່ນ)	-	-	-	-	-
ເງິນຊ່ວຍເຫຼືອລ້ຳໂຄງການດັດແກ້ມະຫາພາກ	-	108,62	321,55	184,90	-
ເງິນປະກອບສ່ວນຂອງສັງຄົມ	**-**	**-**	**-**	**197,00**	**64,88**
ລາຍຈ່າຍລວມ	**27.824,77**	**30.736,00**	**31.002,85**	**30.623,68**	**30.858,17**
ລາຍຈ່າຍບໍລິຫານປົກກະຕິ	**19.981,34**	**17.662,14**	**18.430,24**	**20.547,31**	**19.735,62**
ລາຍຈ່າຍບໍລິຫານປົກກະຕິ (ບໍ່ແມ່ນດອກເບ້ຍ)	18.397,15	15.751,35	15.841,91	17.678,99	17.126,14
ຊຳລະດອກເບ້ຍ	1.584,19	1.910,80	2.588,33	2.868,32	2.609,48
ຕ່າງປະເທດ	1.237,53	1.490,84	2.084,40	2.428,21	2.100,26
ລາຍຈ່າຍລົງທຶນ	**7.843,42**	**13.073,86**	**12.572,61**	**10.076,37**	**11.122,56**
ດຸນເງິນສົດປົກກະຕິ	**-567,47**	**2.917,34**	**3.365,42**	**1.964,03**	**-520,03**
ດຸນງົບປະມານ	**-6.661,94**	**-7.810,99**	**-7.059,06**	**-5.283,15**	**-9.012,42**
(ບໍ່ລວມເງິນຊ່ວຍເຫຼືອລ້ຳ)	-8.410,89	-10.156,52	-9.207,19	-8.112,34	-11.642,58
ດຸ່ນດ່ຽງງົບປະມານ	**6.661,95**	**7.810,99**	**7.059,06**	**5.283,15**	**9.012,42**
ແຫຼ່ງທຶນພາຍໃນ	**4.491,18**	**595,25**	**1.608,05**	**33,53**	**4.792,16**
ລະບົບທະນາຄານ	**3.803,74**	**351,31**	**916,65**	**-863,56**	**3.884,50**
(ການເຄື່ອນໄຫວ) ບັນຊີເງິນຝາກຂອງລັດຖະບານ ຢູ່ລະບົບທະນາຄານ	-	-	-	-	507,11
(ສິນເຊື່ອ) ລະບົບທະນາຄານ	2.404,32	-975,98	2.295,39	-915,72	1.200,00
ຊຳລະເງິນລ່ວງໜ້າໃຫ້ ທຫລ	-	-	-	1.000,00	-2.200,00
(ຈຳໜ່າຍ) ພັນທະບັດຄັງເງິນ	-	-	2.528,70	3.752,25	6.916,61
(ໄຖ່ຖອນ) ພັນທະບັດຄັງເງິນ	-1.510,58	-2.856,01	-3.628,32	-4.700,09	-2.539,22
(ຈຳໜ່າຍ) ພັນທະບັດລັດຖະບານ	2.910,00	4.183,30	617,18	-	-
(ໄຖ່ຖອນ) ພັນທະບັດລັດຖະບານ	-	-64,00	-896,30	-	-
ບໍ່ແມ່ນລະບົບທະນາຄານ	**687,44**	**243,94**	**691,41**	**897,10**	**907,66**
(ຈຳໜ່າຍ) ພັນທະບັດຄັງເງິນ	-	-	-	-	-
(ໄຖ່ຖອນ) ພັນທະບັດຄັງເງິນ	-	-	-	-	-
ຂາຍຊັບສິນ + ເງິນຊຳລະຕົ້ນທຶນ	387,35	60,41	383,27	257,28	61,09
ພັນທະບັດຊຳລະໜີ້ສິນໂຄງການລົງທຶນຂອງລັດ	-	-	-	144,47	-
ເງິນເກີນແຜນ	-	-	-	-	249,32
ຍອດເຫຼືອຜ່ານມາ	-	-	-	363,42	274,27
ຜິດດ່ຽງ	300,09	183,53	308,14	131,93	322,98
ແຫຼ່ງທຶນຕ່າງປະເທດ (ສຸດທິ)	**2.170,77**	**7.215,74**	**5.451,01**	**5.249,62**	**4.220,26**
(ຈຳໜ່າຍ) ພັນທະບັດລັດຖະບານ	-	3.500,11	1.822,56	1.350,00	-
ເງິນກູ້ຢືມມາດຸ່ນດ່ຽງ (ເປັນເງິນກູ້ຜ່ອນຜັນ)	-	-	-	3.606,55	-
ເງິນກູ້ຢືມຕາມແຜນງານ	136,03	327,71	-	-	3.852,16
ເງິນກູ້ຢືມໂຄງການ	3.122,31	5.647,52	6.444,03	3.381,57	5.167,75
ເງິນຊຳລະຕົ້ນທຶນເງິນກູ້ຢືມ	-1.837,71	-2.285,66	-3.427,58	-4.127,93	-5.868,69
ເງິນຊ່ວຍເຫຼືອລ້ຳທີ່ບໍ່ແມ່ນໂຄງການ (ຈາກຍີ່ປຸ່ນ)	-	-	-	-	-
ກູ້ຢືມຕໍ່ສຸດທິ	750,15	26,07	612,00	1.039,42	1.069,04

ໝາຍເຫດ: ນັບແຕ່ປີ 2017, ການເກັບກຳສັງລວມຂໍ້ມູນຜາກງົບປະມານ ໄດ້ປັບປຸງຮູບແບບການລາຍງານ ຈາກລະບົບການລາຍງານແບບສົມບູຮນ ງົບປະມານ ມາເປັນລະບົບການລາຍງານແບບປົ້ປະຕິທິນ.

P ໝາຍເຖິງຕົວເລກເບື້ອງຕົ້ນ

R ໝາຍເຖິງຕົວເລກປັບປຸງໃໝ່

ແຫຼ່ງຂໍ້ມູນ: ກະຊວງການເງິນ.

ຕາຕະລາງທີ 6. ລາຍຮັບງົບປະມານ (ຕື້ກີບ)

ລາຍການ	2016	2017	2018	2019(R)	2020(P)
1. ລາຍຮັບພາສີ-ອາກອນ	**16.426,63**	**16.918,44**	**17.032,24**	**17.747,94**	**15.764,60**
ອາກອນກຳໄລ	1.750,85	1.979,66	2.073,34	2.209,25	1.727,75
